ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
老挝人民民主共和国
和平 独立 民主 统一 繁荣

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 360/ບລຈ
编号：360/老-中证券
ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2025
首都万象市，日期：2025 年 8 月 19 日

ໜັງສືແຈ້ງເຊີນ
邀请函

ຮຽນ: ທ່ານຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ທີ່ນັບຖື!
致：尊敬的老-中证券公众公司各位股东
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະໄໝສາມັນ ປະຈຳປີ 2024.
主题：邀请参加老-中证券 2024 年度股东大会

- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ I ປະຈຳປີ 2025, ສະບັບເລກທີ 003/ບລຈ, ລົງວັນທີ 24 ກໍລະກົດ 2025.
- 根据 2025 年 7 月 24 日签署的《2025 年第一次董事会会议决议》（[老中证券]第 003 号）。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຂໍຖືເປັນກຽດຢ່າງສູງຮຽນເຊີນທ່ານຜູ້ຖືຮຸ້ນ ບລຈ ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024 ໃນວັນພຸດ ທີ 5 ກັນຍາ 2025 ເວລາ 9:00 ໂມງ ເປັນຕົ້ນໄປ (ເລີ່ມລົງທະບຽນເວລາ 8:30 ໂມງ) ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄາຕະຫຼາດຫຼັກຊັບລາວ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

老-中证券公众公司（以下简称“老-中证券”）诚邀各位股东出席老-中证券 2024 年度股东大会。会议将于 2025 年 9 月 5 日（星期三）北京时间 10:00 举行，签到时间为北京时间 09:30，地点位于老挝首都万象市赛色塔县彭覃村老挝证券交易所大楼 8 楼大会议室，届时将审议各项议案。

ນອກຈາກນີ້ ບລຈ ຍັງໄດ້ແຈ້ງວາລະກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024, ເອກະສານຄັດຕິດເພື່ອໃຊ້ໃນການພິຈາລະນາ ແລະ ລົງຄະແນນສຽງທັງໝົດນັ້ນ ໄດ້ຖືກເຜີຍແຜ່ໂດຍ ບລຈ ຜ່ານເວັບໄຊຂອງ ບລຈ (www.lcs.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la) ລວມ

ທັງກຳນົດເອົາວັນທີ 8 ສິງຫາ 2025 ເປັນມື້ປິດປຶ້ມບັນຊີຫະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024 ເຊິ່ງໄດ້ເປີດເຜີຍຂໍ້ມູນຮຽບຮ້ອຍແລ້ວ.

此外，老-中证券已通过老-中证券公众公司网站（http://www.lcs.com.la）以及老挝证券交易所信息系统（www.lsx.com.la）公布了 2024 年度股东大会的议程及所有供审议和表决的附件。同时，已确定 2025 年 8 月 8 日为股权登记日，以确认有权出席本次股东大会的股东资格，相关信息均已完整披露。

ຫວັງຢ່າງຍິ່ງວ່າ ທ່ານຄົງສະລະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

我们殷切期望您能拨冗出席本次会议。

ປະທານສະພາບໍລິຫານ

董事长

ທ່ານ ໜູໄຊ ພູມສຸວັນ

努赛·普苏万

ເອກະສານຄັດຕິດ ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024

1. ເອກະສານຄັດຕິດ 1: ວາລະກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024;
2. ເອກະສານຄັດຕິດ 2: ວາລະທີ 1 ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ;
3. ເອກະສານຄັດຕິດ 3: ວາລະທີ 2 ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ;
4. ເອກະສານຄັດຕິດ 4: ວາລະທີ 3 ພິຈາລະນາ ແລະ ຮັບຮອງ ການປັບປຸງບາງເນື້ອໃນຂອງກົດລະບຽບ ບລຈ;
5. ເອກະສານຄັດຕິດ 5: ວາລະທີ 4 ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປະຈຳປີ 2024 ຂອງ ບລຈ;
6. ເອກະສານຄັດຕິດ 6: ວາລະທີ 5 ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານ ຂອງ ບລຈ;
7. ເອກະສານຄັດຕິດ 7: ວາລະທີ 6 ພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນ ຂອງ ພະນັກງານ ບລຈ;
8. ເອກະສານຄັດຕິດ 8: ວາລະທີ 7 ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນໃຫ້ ສະມາຊິກສະພາ ບໍລິຫານ ບລຈ;
9. ເອກະສານຄັດຕິດ 9: ໃບມອບສິດ;
10. ເອກະສານຄັດຕິດ 10: ຄຳແນະນຳກ່ຽວກັບການລົງຄະແນນສຽງ;
11. ເອກະສານຄັດຕິດ 11: ຄຳແນະນຳກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນຳສະເໜີໂຕເພື່ອເຂົ້າຮ່ວມກອງ ປະຊຸມ;
12. ເອກະສານຄັດຕິດ 12: ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024.

老-中证券 2024 年度股东大会附件

1. **附件 1：** 老-中证券 2024 年度股东大会会议议程；
2. **附件 2：** 议案一 审议老-中证券 2024 年度工作报告暨 2025 年度经营计划；
3. **附件 3：** 议案二 审议老-中证券 2024 年度审计报告；
4. **附件 4：** 议案三 审议变更老-中证券公司章程部分内容；
5. **附件 5：** 议案四 审议老-中证券 2024 年度分红方案；
6. **附件 6：** 议案五 审议老-中证券员工奖励方案；
7. **附件 7：** 议案六 审议老-中证券员工薪酬调整方案；
8. **附件 8：** 议案七 审议老-中证券董事会津贴方案；
9. **附件 9：** 授权委托书；
10. **附件 10：** 表决说明；
11. **附件 11：** 出席会议所需文件及身份证明指引；
12. **附件 12：** 老-中证券 2024 年度股东大会会议地点地图。

ໝາຍເຫດ:

备注：

1. ຜູ້ຖືຮຸ້ນທຸກທ່ານສາມາດດາວໂຫຼດເອົາໜັງສືແຈ້ງເຊີນ ພ້ອມເອກະສານຄັດຕິດໄດ້ທີ່ເວັບໄຊຂອງຕະຫຼາດຫຼັກຊັບ http://www.lsx.com.la ຫຼື ຈະໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານໃນການເຂົ້າຮ່ວມກອງປະຊຸມ ຢູ່ອາຄານຕະຫຼາດຫຼັກຊັບລາວ ຊັ້ນ 4, ພະແນກຄຸ້ມຄອງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທລະສັບ: +85621 454361-4 ເລີ່ມແຕ່ວັນທີ 18 ສິງຫາ 2025 ເປັນຕົ້ນໄປ.

   所有股东均可登录老挝证券交易所网站（http://www.lsx.com.la）下载邀请函及相关附件。此外，自 2025 年 8 月 18 日起，股东也可前往老挝证券交易所大楼 4 楼证券结算托管部领取会议邀请函（地址：首都万象市赛色塔县 T4 路彭覃村，电话：+85621 454361-4）。

2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ.

   若股东亲自出席会议，请于会议当天携带本人身份证、户口本或护照（外国股东适用）以便签到登记时出示。

3. ສຳລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ພ້ອມລົງລາຍເຊັນໃນໃບມອບສິນຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

   如股东委托代表出席会议并代为表决，请按要求正确、完整填写随附的授权委托书并签字。

ຜູ້ປະສານງານຂອງ ບລຈ:

老-中证券联系人：

1. ທ່ານ ອານຸຍຸດ ລາດສະສັບ, ໂທ: 020 7779 2828

   阿努育·拉沙萨先生，电话：020 7779 2828

ວາລະ

ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024

老-中证券公众公司

2024 年度股东大会议程

ເວລາປະຊຸມ: ວັນທີ 5 ກັນຍາ 2025 ເວລາ 9:00-11:00

会议时间： 2025 年 9 月 5 日，北京时间 10:00-12:00

ຮູບແບບກອງປະຊຸມ: ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄາຕະຫຼາດຫຼັກຊັບລາວ ບວກຂາຮຸ້ນລາຍໃຫຍ່ເຂົ້າຮ່ວມອ່ອນລາຍ

会议组织形式： 老交所 8 楼大会议室结合大股东线上参会

ຜູ້ຮຽກປະຊຸມ: ທ່ານ ໜູໄຊ ພູມສຸວັນ ປະທານສະພາບໍລິຫານ ບລຈ

会议召集： 努赛·普苏万 董事长

ປະທານກອງປະຊຸມ: ທ່ານ ໜູໄຊ ພູມສຸວັນ

会议主席： 努赛·普苏万

ຜູ້ເຂົ້າຮ່ວມປະຊຸມ: ຜູ້ຖືຮຸ້ນທັງໝົດ ຂອງ ບລຈ

参会人员： 老-中证券全体股东

ວາລະ
ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024
老-中证券公众公司
2024 年度股东大会议议程

ເວລາ 时间	ວາລະ ແລະ ເນື້ອໃນກອງປະຊຸມ 会议议案内容	ຜູ້ນຳສະເໜີ/ພາກສ່ວນຮັບຜິດຊອບ 报告人/负责部门
ນ.ອ.08:30-09:00 北京时间 09:30-10:00	ລົງທະບຽນ 签到	ກອງເລຂາ 秘书处
ນ.ອ.09:00-09:10 北京时间 10:00-10:10	ປະທານກອງປະຊຸມ ກ່າວເປີດກອງປະຊຸມ 会议主席宣布会议开始	ທ່ານ ໜູໄຊ ພູມສຸວັນ 努赛·普苏万
ນ.ອ.09:10-09:30 北京时间 10:10-10:30	ວາລະ 1: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ 议案一：审议老-中证券 2024 年度工作报告暨 2025 年度经营计划	ລາຍງານໂດຍ: ທ່ານ ລິນລີ ຜູ້ອຳນວຍການ 报告人： 李林 总经理 ພິຈະລະນາ ແລະ ຮັບຮອງ ໂດຍ: ກອງປະຊຸມຜູ້ຖືຮຸ້ນ ດ້ວຍຮູບແບບລົງຄະແນນສຽງ. 股东会审议，并进行投票表决
ນ.ອ.09:30-09:40 北京时间 10:30-10:40	ວາລະ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ 议案二：审议《老-中证券 2024 年度审计报告》	
ນ.ອ.09:40-09:50 北京时间 10:40-10:50	ວາລະ3: ພິຈາລະນາ ແລະ ຮັບຮອງ ປັບປຸງບາງເນື້ອໃນ ຂອງກົດລະບຽບ ບລຈ 议案三：审议变更老-中证券公司章程部分内容	
ນ.ອ.09:50-10:05 北京时间 10:50-11:05	ວາລະ 4: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ 议案四：审议老-中证券 2024 年度分红方案	
ນ.ອ.10:05-10:20 北京时间 11:05-11:20	ວາລະ 5: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານຂອງ ບລຈ 议案五：审议老-中证券员工奖励方案	
ນ.ອ.10:20-10:35 北京时间 11:20-11:35	ວາລະ 6: ພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນຂອງພະນັກງານ ບລຈ 议案六：审议老-中证券员工薪酬调整方案	
ນ.ອ.10:35-10:50 北京时间 11:35-11:50	ວາລະ 7: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນ ໃຫ້ສະມາຊິກສະພາບໍລິຫານ ບລຈ 议案七：审议老-中证券董事会津贴方案	
ນ.ອ.10:50-11:00 北京时间 11:50-12:00	ປະທານກອງປະຊຸມ ກ່າວປິດກອງປະຊຸມ 会议主席宣布会议结束	ທ່ານ ໜູໄຊ ພູມສຸວັນ 努赛·普苏万

ວາລະ

ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024

老-中证券公众公司

2024 年度股东大会议案

ລຳດັບ 序号	ວາລະ ແລະ ເນື້ອໃນກອງປະຊຸມ 会议议案内容
1	ວາລະ 1: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ 议案一：审议老-中证券 2024 年度工作报告暨 2025 年度经营计划
2	ວາລະ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ 议案二：审议《老-中证券 2024 年度审计报告》
3	ວາລະ3: ພິຈາລະນາ ແລະ ຮັບຮອງ ປັບປຸງບາງເນື້ອໃນ ຂອງກົດລະບຽບ ບລຈ 议案三：审议变更老-中证券公司章程部分内容
4	ວາລະ 4: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ 议案四：审议老-中证券 2024 年度分红方案
5	ວາລະ 5: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານຂອງ ບລຈ 议案五：审议老-中证券员工奖励方案
6	ວາລະ 6: ພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນຂອງພະນັກງານ ບລຈ 议案六：审议老-中证券员工薪酬调整方案
7	ວາລະ 7:ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນ ໃຫ້ສະມາຊິກສະພາບໍລິຫານ ບລຈ 议案七：审议老-中证券董事会津贴方案

*ໝາຍເຫດ: ອີງຕາມເນື້ອໃນກຳນົດໄວ້ໃນ ມາດຕາ 25 ມະຕິສະເພາະຂອງກອງປະຊຸມຜູ້ຖືຮຸ້ນ ຂອງກົດລະບຽບ ບລຈ, ວາລະ3: ພິຈາລະນາ ແລະ ຮັບຮອງ ປັບປຸງບາງເນື້ອໃນ ຂອງກົດລະບຽບ ບລຈ, ກ່ຽວກັບປັບປຸງເນື້ອໃນ ກົດ ລະບຽບ ເປັນ ມະຕິສະເພາະຂອງກອງປະຊຸມຜູ້ຖືຮຸ້ນ. ອີງຕາມ ມາດຕາ 24 ມະຕິຂອງກອງປະຊຸມຜູ້ຖືຮຸ້ນ ຂອງກົດ ລະບຽບ ບລຈ ໄດ້ກຳນົດວ່າ: ມະຕິສະເພາະຈະມີຄຸນຄ່າໃຊ້ໄດ້ກໍ່ຕໍ່ເມື່ອມີຄະແນນສຽງ ຂອງຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າຜູ້ຖືຮຸ້ນ ຢ່າງໜ້ອຍ 70% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ມີຢ່າງໜ້ອຍ 80% (ແປດສິບສ່ວນຮ້ອຍ) ຂອງຈຳນວນຮຸ້ນທີ່ໄດ້

ຖອກແລ້ວທັງໝົດ. ວາລະອື່ນໆເປັນ ມະຕິທົ່ວໄປ, ຈະມີຄຸນຄ່າໃຊ້ໄດ້ກໍ່ຕໍ່ເມື່ອໄດ້ຮັບຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຜູ້ຖືຮຸ້ນ (ລວມທັງຕົວແທນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບການມອບສິດແຕ່ງຕັ້ງ) ທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

*注：根据老-中证券公司章程“第二十五条 股东大会特别决议”规定，本次股东大会“议案三 审议变更老-中证券公司章程部分内容”涉及公司章程变更，属特别决议。根据公司章程“第二十四条 股东大会决议”特别决议需“经出席股东大会的股东（包括股东授权代表和代理人）所持表决权的 70%以上，且所持表决权占公司已实缴股份 80%以上的通过，特别决议有效。”其余议案表决属普通决议，“经出席股东大会的股东（包括股东授权代表和代理人）所持表决权的二分之一以上通过，该普通决议具有效力。

ບົດລາຍງານ ຜົນການດຳເນີນທຸລະກິດ ບລຈ ປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດ ບລຈ ປະຈຳປີ 2025

老-中证券 2024 年度工作报告暨 2025 年度经营计划

ໃນປີ 2024, ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ຕໍ່ໄປເອີ້ນວ່າ: “ບລຈ”) ຈະສຸມໃສ່ດຳເນີນການວຽກງານຕ່າງໆ ໃນການປະດິດສ້າງ ແລະ ການຕອບສະໜອງການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ແລະ ການຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຫຼັກໆແມ່ນສະແດງໃຫ້ເຫັນການສືບຕໍ່ໃຫ້ບໍລິການເປັນທີ່ປຶກສາດ້ານການເງິນ ແລະ ການຄ້ຳປະກັນການອອກຈຳໜ່າຍຫຼັກຊັບຮ່ວມສຳລັບພັນທະບັດລັດຖະບານ, ຊຸກຍູ້ການອອກຈຳໜ່າຍພັນທະບັດລັດຖະບານສະກຸນເງິນຢວນ, ສຸມໃສ່ໂຄງການການບິນລາວ, ເອົາໃຈໃສ່ວຽກງານໂຄງການສຳຮອງຂອງ ພະແນກທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ການກະກຽມລິເລີ່ມວຽກງານກອງທຶນ, ການຫຼຸດຜ່ອນຕົ້ນທຶນໃນການດຳເນີນທຸລະກິດໂດຍຜ່ານການຍົກຍ້ານທີ່ຢູ່ຂອງບໍລິສັດ ແລະ ດ້ານອື່ນໆ, ໃນຂະນະດຽວກັນກໍຂະຫຍາຍທຸລະກິດຕ່າງໆຢ່າງຕັ້ງໜ້າເພື່ອເພີ່ມລາຍໄດ້ປະຢັດລາຍຈ່າຍ. ປະຈຸບັນຈຶ່ງຂໍສະຫຼຸບລາຍງານສະພາບວຽກງານຕົ້ນຕໍປະຈຳປີຂອງ ບລຈ ຕໍ່ກອງປະຊຸມຜູ້ຖືຮຸ້ນ ຄືດັ່ງນີ້:

2024 年，老-中证券公众公司（下简称“老-中证券”）一切工作以创造和满足首次公开募股（IP0）和在老交所上市为核心开展各项工作。主要体现在继续做好国债联合财务顾问和承销，推动人民币国债发行，聚焦老挝航空项目，注重投行项目储备，筹备启动基金业务，通过公司地址搬迁降低运营成本等方面，在积极拓展各项业务的同时做好开源节流。现将公司年度主要工作情况向股东大会总结汇报如下：

I. ສະພາບເສດຖະກິດມະຫາພາກທີ່ກ່ຽວຂ້ອງ

相关宏观经济情况

ໃນປີ 2024, ອີງໃສ່ການສິ້ນສຸດຂອງຮອບວຽນການຂຶ້ນອັດຕາດອກເບ້ຍຂອງ Fed ແລະ ຕະຫຼາດຄາດການວ່າຈະມີການຫຼຸດອັດຕາດອກເບ້ຍຂອງໂດລາ, ການອ່ອນຄ່າຂອງເງິນກີບກໍ່ໄດ້ຮັບການຄວບຄຸມ. ລັດຖະບານລາວໄດ້ປະກາດປິດສະຖາບັນແລກປ່ຽນເງິນຕາ, ສ້າງຕັ້ງຕະຫຼາດແລກປ່ຽນເງິນຕາຕ່າງປະເທດອອນໄລ ແລະ ສ້າງຕັ້ງທະນາຄານຄ້ຳແຫ່ງຊາດລາວ ແລະ ມາດຕະການອື່ນໆເພື່ອເຮັດໃຫ້ອັດຕາແລກປ່ຽນມີສະຖຽນລະພາບ, ເຊິ່ງກໍໄດ້ຮັບໝາກຜົນໃນທາງທີ່ດີ. ພ້ອມດຽວກັນນັ້ນ, ອຸດສາຫະກຳການທ່ອງທ່ຽວ ແລະ ການຄ້າຂອງ ສປປ ລາວ ກໍຄ່ອຍໆໄດ້ຮັບການຟື້ນຟູ, ລາຍຮັບຈາກອັດຕາແລກປ່ຽນເງິນຕາຕ່າງປະເທດເພີ່ມຂຶ້ນ, ຄັງສຳຮອງເງິນຕາຕ່າງປະເທດຂອງລັດຖະບານກໍເພີ່ມຂຶ້ນເຊັ່ນກັນ. ມາຮອດທ້າຍເດືອນ ທັນວາ ປີ 2024, ຄັງສຳຮອງເງິນຕາຕ່າງປະເທດຂອງລາວບັນລຸ 2.10 ຕື້ໂດລາ, ເປັນສະຖິຕິສູງສຸດໃນປະຫວັດສາດ, ທີ່ເພີ່ມຂຶ້ນສູງເຖິງ 1.30 ຕື້ໂດລາ ເມື່ອທຽບກັບປີ 2023, ກາຍເປັນປັດໄຈທາງບວກໃນການຮັກສາສະຖຽນລະພາບຂອງອັດຕາແລກປ່ຽນ. ເມື່ອພິຈາລະນາແນວໂນ້ມຂອງອັດຕາແລກປ່ຽນໃນປີ 2024, ຄ່າເງິນກີບໄດ້ຫຼຸດລົງກັບມາມີສະຖຽນລະພາບເມື່ອທຽບກັບເງິນໂດລາ ແລະ ເງິນຢວນໃນ 6 ເດືອນຕົ້ນປີ, ລວມທັງຮອດເດືອນທັນວາ

ໂດຍພື້ນຖານແລ້ວກໍຈະດີດຕົວກັບຄືນສູ່ລະດັບຊ່ວຕົ້ນປີ. ອີງຕາມອັດຕາແລກປ່ຽນຂອງທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ ນະວັນທີ 31 ທັນວາ 2023, 1 ໂດລາ=20,599 ກີບ, 1 ຢວນ=2,981 ກີບ; ນະວັນທີ 30 ທັນວາ 2024, 1 ໂດລາ=21,859ກີບ, 1 ຢວນ=2,946 ກີບ.

2024 年，随着美联储加息周期结束和市场对美元降息周期的预期，基普贬值得到控制。老挝政府通过关停货币兑换机构，成立线上外汇交易市场及设立老挝国家黄金银行等措施稳定汇率，取得了积极效果。同时，老挝旅游、贸易行业逐步恢复，外汇收入增加，政府外汇储备有所增长。截至 2024 年 12 月末，老挝外汇储备达 21.02 亿美元，创下历史新高，较 2023 年末的 13 亿美元有较大幅度增长，成为维持汇率稳定的积极因素。从 2024 年汇率走势上看，至 6 月末基普兑美元和人民币止跌回稳，至 12 月末基本反弹至年初水平。根据老挝外贸银行汇率，2023 年 12 月 31 日，1 美元=20,599 基普，1 元=2,981 基普；2024 年 12 月 31 日，1 美元=21,859 基普，1 元=2,946 基普。

ການຂະຫຍາຍຕົວຂອງກຳໄລຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ໄດ້ສົ່ງຜົນກະທົບໃນທາງບວກຕໍ່ທຸລະກິດຫຼັກຂອງ ບລຈ ເຊັ່ນ: ການເປັນທີ່ປຶກສາດ້ານການເງິນ ແລະ ການຄ້ຳປະກັນການອອກຈຳໜ່າຍພັນທະບັດລັດຖະບານ, ການລົງທຶນຂອງການຄ້າຫຼັກຊັບໃນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ການເພີ່ມວຽກງານ IPO ໃໝ່ຂອງທະນາຄານທີ່ມີສັກກະຍະພາບ 2 ແຫ່ງ ເປັນຕົ້ນ.

商业银行金融机构盈利增长，为老-中证券各项核心业务，如：国债财顾和承销、外贸银行自营投资和新增 2 家潜在银行 IPO 业务等形成积极影响。

II. ວຽກງານທີ່ກ່ຽວຂ້ອງກັບກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິຫານ
股东会和董事会相关工作

ບລຈ ໄດ້ສຳເລັດໃນການຈັດ ກອງປະຊຸມສະພາບໍລິຫານ ບລຈ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2024 ແລະ ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2023, ສຳເລັດການຈັດກອງປະຊຸມສະພາບໍລິຫານ ບລຈ ສະໄໝວິສາມັນ 2 ຄັ້ງ ແລະ ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ 2 ຄັ້ງ ໂດຍການລົງຄະແນນສຽງໃນຜ່ານຮູບແບບເຊັນໝຸນວຽນ. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາມະຕິທີ່ສຳຄັນຈຳນວນໜຶ່ງ ເຊັ່ນ: ເຫັນດີຮັບຮອງການຍົກຍ້າຍທີ່ຢູ່ຂອງ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ໄປຕັ້ງຢູ່ເຂດເສດຖະກິດພິເສດບຶງທາດຫຼວງ, ແຕ່ງຕັ້ງຄະນະກອງເລຂານຸການສະພາບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ, ປ່ຽນແປງບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ມາເປັນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ເຫັນດີຮັບຮອງ ກົດລະບຽບຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ແຕ່ງຕັ້ສະມາຊິກສະພາບໍລິຫານ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ແລະ ແຕ່ງຕັ້ງຄະນະອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ເປັນຕົ້ນ.

在公司董事会和各方股东的指导和支持下，老-中证券有限公司成功召开 2024 年第一次董事会会议和 2023 年度股东会，并通过会签表决方式成功召开两次临时董事会会议和两次临时股东会。审议通过了搬迁老-中证券有限公司地址至塔銮湖经济特区、任命老-中证券有限公司董事会秘书处成员、变更老-中证券有限公司为老-中证券公众公司、通过

《老-中证券公众公司章程》、任命老-中证券公众公司董事会成员以及任命老-中证券公众公司管理层等若干重要决议。

ໃນວັນທີ 25 ຕຸລາ, ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ໄດ້ສຳເລັດການດັດແປງກົນໄກ ແລະ ຂຶ້ນທະບຽນປ່ຽນແປງທຸລະກິດມາເປັນ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ. ໃນທ້າຍເດືອນພະຈິກກໍໄດ້ສຳເລັດການຈັດກອງປະຊຸມສະພາບໍລິຫານ ບລຈ ສະໄໝວິສາມັນ ຄັ້ງທີ 1 ປະຈຳປີ 2024 ແລະ ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝວິສາມັນ ຄັ້ງທີ 1 ປະຈຳປີ 2024 ໂດຍການລົງຄະແນນສຽງໃນຜ່ານຮູບແບບເຊັນໝຸນວຽນ. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງສ້າງຕັ້ງບັນດາຄະນະກຳມະການຂອງສະພາບໍລິຫານ, ຮັບຮອງແຜນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຂອງ ບລຈ ແລະ ເຫັນດີຮັບຮອງໃຫ້ ບລຈ ຈົດທະບຽນຮຸ້ນໃນກະດານຫຼັກຂອງຕະຫຼາດຫຼັກຊັບລາວ ເປັນຕົ້ນ. ວຽກງານການປັບປຸງໂຄງສ້າງທັງໝົດກໍສຳເລັດຢ່າງຈົບງາມ ແລະ ເງື່ອນໄຂຂອງ IPO ກໍບັນລຸຕາມຄາດໝາຍໃນເບື້ອງຕົ້ນແລ້ວ.

10 月 25 日，老-中证券有限公司完成改制为老-中证券公众公司工商变更登记。于 11 月底通过会签表决方式成功召开老-中证券公众公司 2024 年第一次临时董事会会议和 2024 年第一次临时股东大会。审议通过了设立老-中证券各董事会委员会，老-中证券首次公开募股（IPO）方案和审议同意老-中证券在老交所主板上市等议案。顺利完成全部股改工作，初步具备 IPO 条件。

III. ສະພາບການດຳເນີນທຸລະກິດປະຈຳປີ

年度经营情况

ມາຮອດວັນທີ 31 ທັນວາ 2023, ບລຈ ມີຊັບສິນລວມປະມານ 165.06 ຕື້ກີບ, ຊັບສິນສຸດທິປະມານ 125.28 ຕື້ກີບ. ລາຍຮັບຈາກການດຳເນີນງານຕົວຈິງໃນໄລຍະການລາຍງານປະມານ 15.81 ຕື້ກີບ ແລະ ມີກຳໄລສຸດທິປະມານ 11.32 ຕື້ກີບ.

截至 2024 年 12 月 31 日，公司总资产 1,650.61 亿基普（约合 5,602.90 万元），净资产 1,252.80 亿基普（约合 4,252.54 万元）。报告期内实现营业收入 158.05 亿基普（约合 536.50 万元），净利润 113.21 亿基普（约合 384.28 万元）。

ຕາຕະລາງກຳໄລຂາດທຶນທີ່ກ່ຽວຂ້ອງກັບການປ່ຽນແປງລາຍການບັນຊີ

ລາຍການ	31 ທັນວາ 2023 (ກີບ)	31 ທັນວາ 2024 (ກີບ)	ສັດສ່ວນການປ່ຽນແປງ
ລາຍຮັບຈາກການດຳເນີນງານ	12,206,286,750	15,805,189,364	29.48%
ລາຍຈ່າຍຈາກການດຳເນີນງານ	10,677,705,768	4,484,391,136	-58.00%
ກຳໄລກ່ອນອາກອນ	1,528,580,982	11,320,798,228	640.61%
ກຳໄລສຸດທິ	1,528,580,982	11,320,798,228	640.61%
ອັດຕາສ່ວນກຳໄລສຸດທິ	12.52%	71.63%	472.12%

ROE	1.51%	9.04%	498.68%

利润表相关科目变动表

项　目	2023 年 12 月 31 日		2024 年 12 月 31 日		变动比例
	基普	合人民币万元	基普	合人民币万元	
营业收入	12,206,286,750	414.33	15,805,189,364	536.50	29.48%
营业支出	10,677,705,768	362.45	4,484,391,136	152.22	-58.00%
利润总额	1,528,580,982	51.88	11,320,798,228	384.28	640.61%
净利润	1,528,580,982	51.88	11,320,798,228	384.28	640.61%
净利率		12.52%		71.63%	472.12%
净资产收益率		1.51%		9.04%	498.68%

IV. ສະພາບພື້ນຖານຂອງບັນດາທຸລະກິດຫຼັກຂອງ ບລຈ ໃນປີ 2024 ມີດັ່ງນີ້:

2024 年公司各主营业务基本情况如下：

1. ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ

投行业务

ໃນປີ 2024, ວຽກງານ ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ຂອງ ບລຈ ໄດ້ມີລາຍຮັບຈາກການດຳເນີນງານ ຈຳນວນ 3,688,433,540 ກີບ. ໃນນັ້ນແມ່ນມາຈາກການທີ່ ບລຈ ໃນຖານະເປັນທີ່ປຶກສາດ້ານການເງິນຫຼັກຮ່ວມກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ໃນໂຄງການປະເມີນມູນຄ່າຮຸ້ນຂອງລັດວິສາຫະກິດການບິນລາວທີ່ໄດ້ສຳເລັດລົງຢ່າງຈົບງາມ

2024 年公司投行业务营业收入 3,688,433,540 基普（约合 125.20 万元）。值得一提的是，公司作为主财务顾问联合外贸银行-恭泰证券顺利完成老挝航空股权价值评估项目。

2. ວຽກງານ ຄ້າຫຼັກຊັບ

自营业务

ໃນປີ 2024 ວຽກງານຄ້າຫຼັກຊັບມີກຳໄລຈາກການດັດແປງມູນຄ່າຍຸດຕິທຳ ຢູ່ທີ່ 5,749,466,430 ກີບ.

2024 年自营业务收益 5,749,466,430 基普（约合 195.16 万元）。

3. ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ

经纪业务

ໃນປີ 2024, ວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ ຂອງບໍລິສັດໄດ້ມີລາຍຮັບຕົວຈິງ 7,976,422,645 ກີບ. ໃນນັ້ນ, ລາຍຮັບວຽກງານ ນາຍໜ້າຊື້ ຂາຍຫຼັກຊັບ 11,145,524 ກີບ ແລະ ລາຍຮັບວຽກງານຕົວແທນຈຳໜ່າຍພັນທະບັດລັດຖະບານ 7,965,277,121 ກີບ.

2024 年公司实现经纪业务收入 7,976,422,645 基普（约合 270.75 万元）。其中，证券经纪业务收入 11,145,524 基普（约合 0.37 万元），国债代销业务收入 7,965,277,121 基普（约合 270.38 万元）。

ທັງ 3 ບໍລິສັດຫຼັກຊັບໄດ້ມີການລົງນາມເຊັນໃນສັນຍາວ່າດ້ວຍການເປັນຕົວແທນຈຳໜ່າຍພັນທະບັດລັດຖະບານ ກັບ ທະນາຄານແຫ່ງປະເທດຈີນ (ຮົງກົງ) ຈຳກັດ ສາຂານະຄອນຫຼວງວຽງຈັນ ແລະ ເຮັດໃຫ້ຈຳນວນທະນາຄານຕົວແທນຈຳໜ່າຍພັນທະບັດລັດຖະບານເພີ່ມຂຶ້ນເປັນ 6 ແຫ່ງ. ໃນດ້ານການປະດິດສ້າງໃໝ່ທາງທຸລະກິດ, ບລຈ ກາຍເປັນທີ່ປຶກສາດ້ານການເງິນຫຼັກໃນວຽກງານພັນທະບັດລັດຖະບານ, ພ້ອມທັງຮ່ວມກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ແລະ ບໍລິສັດຫຼັກຊັບ ແອລ်ດີບີ ຈຳກັດຜູ້ດຽວ ໄດ້ສຳເລັດຊຸກຍູ້ໃຫ້ກະຊວງການເງິນອອກຈຳໜ່າຍພັນທະບັດລັດຖະບານສະກຸນເງິນຢວນ ມູນຄ່າ 500 ລ້ານຢວນ ໃນທ້າຍເດືອນທັນວາ ແລະ ໄດ້ສຳເລັດການເປັນຕົວແທນຈຳໜ່າຍ 275 ລ້ານຢວນ. ເຊິ່ງເງິນຢວນໄດ້ຖືກລວມເຂົ້າໃນຄັງສຳຮອງເງິນຕາຕ່າງປະເທດຂອງກະຊວງການເງິນຂອງ ສປປ ລາວ ຢ່າງເປັນທາງການ.

三家证券公司与中国银行万象分行签署国债代销协议，国债代销银行增加到 7 家。业务创新方面，老-中证券成为国债业务主财务顾问，并联合外贸银行-恭泰证券、老挝开发银行证券成功推动财政部于 12 月底发行 5 亿人民币国债，并完成 2.75 亿人民币代销。人民币正式列入老挝财政部外汇储备。

4. ວຽກງານ ກອງທຶນສ່ວນບຸກຄົນ

私募基金管理业务

ໃນດ້ານໃບຢັ້ງຢືນຂອງນັກວິຊາຊີບ: ຜູ້ອຳນວຍການໄດ້ຜ່ານການສອບເສັງຄຸນສົມບັດທີ່ຖືກຕ້ອງຕາມລະບຽບຂອງນັກວິຊາຊີບປະເພດກອງທຶນສຳລັບນັກວິຊາຊີບທຸລະກິດຫຼັກຊັບຄົນຕ່າງປະເທດ ແລະ ໄດ້ຮັບໃບຢັ້ງຢືນນັກວິຊາຊີບການບໍລິຫານກອງທຶນສ່ວນບຸກຄົນທີ່ອອກໃຫ້ໂດຍ ສຄຄຊ. ທັງ 3 ບໍລິສັດຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ກໍໄດ້ບັນລຸຄວາມເປັນເອກະພາບໃນການຈັດຝຶກອົບຮົມນັກວິຊາຊີບປະເພດກອງທຶນລຸ້ນທຳອິດ (ຮຽນວັນເສົາ-ອາທິດ) ທີ່ຕະຫຼາດຫຼັກຊັບລາວ ແຕ່ວັນທີ 21 ທັນວາ ເຖິງວັນທີ 26 ມັງກອນ 2025, ເພື່ອກະກຽມໃຫ້ແກ່ນັກວິຊາຊີບປະເພດກອງທຶນໃໝ່ຂອງ ບລຈ.

从业人员资质方面：总经理通过外籍证券从业人员基金从业资格法规考试，获证管委办公厅颁发的私募基金管理从业资格证书。三家证券公司与老交所于 2024 年 12 月 21 日至 2025 年 1 月 26 日在老交所举行第一届基金从业人员培训（周末班），为公司新增基金从业人员做好准备。

ໃນດ້ານວຽກງານສຳຮອງ: ໃນປີ 2024, ບລຈ ໄດ້ມີການປຶກສາຫາລືຢ່າງເລິກຫຼາຍຄັ້ງກ່ຽວກັບການດຳເນີນການຮ່ວມມືດ້ານທຸລະກິດກອງທຶນກັບພາກສ່ວນທີ່ຂຶ້ນກັບລັດຖະບານ ແລະ ສະຖາບັນຕ່າງໆ ເຊັ່ນ: ສຄຄຊ, ກະຊວງການເງິນຕາງໜ້າໂດຍ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ,

ກອງທຶນການລົງທຶນໂດຍກົງຂອງເງິນຢວນຂ້າມຊາຍແດນ, EY ຫວຽດນາມ, ວຽງຈັນປະກັນໄພ ແລະ Lao Financial Holdings ເປັນຕົ້ນ.

业务储备方面：2024 年，公司与证管委办公厅、财政部政府投资企业和保险管理司、外贸银行、跨境人民币直投基金、安永越南、万象保险和老挝金控等政府部门和机构就开展基金业务合作进行了多次深入讨论。

V. ວຽກງານບຸກຄະລາກອນ ແລະ ການສ້າງລະບຽບຄຸ້ມຄອງ
人力工作和制度建设

1. ວຽກງານບຸກຄະລາກອນ
人力工作

1) **ການສູນເສຍບຸກຄະລາກອນ:** ເພື່ອປະຢັດຕົ້ນທຶນ ແລະ ຮັບປະກັນການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ລາວ, ຫຼັງຈາກຄ່າເງິນກີບອ່ອນຄ່າລົງເກືອບ 70% ແລ້ວຄະນະອຳນວຍການຍັງຄົງທົນຕໍ່ຄວາມກົດດັນ ແລະ ບໍ່ໄດ້ມີການປັບຂຶ້ນເງິນເດືອນຂອງພະນັກງານທົ່ວໄປ, ເຊິ່ງສ່ວນຕ່າງລະດັບລາຍຮັບຂອງພະນັກງານແມ່ນຕ່ຳກວ່າ ບໍລິສັດຫຼັກຊັບ ແລະ ສະຖາບັນການເງິນອື່ນໆຂ້ອນຂ້າງຫຼາຍ, ຈຶ່ງເຮັດໃຫ້ ທ່ານ ກຽດຕິສັດ ທອງສະຫງວນ ວິຊາການພະແນກທີ່ປຶກສາດ້ານການເງິນ ແລະ ທ່ານ ນາງ ບຸດສະບາ ສີວົງຄຳ ທີ່ເປັນບັນຊີຂອງພະແນກບັນຊີ-ການເງິນ ກໍໄດ້ລາອອກຕາມລຳດັບ. ທ່ານ ນາງ ບຸບຜາທິບ ວົງດວງຈັນ ຫົວໜ້າພະແນກບັນຊີ-ການເງິນ ກໍໄດ້ສະເໜີລາອອກແລ້ວ, ຜ່ານການປຶກສາຫາລືຂອງຄະນະອຳນວຍການ ແມ່ນຕົກລົງເຫັນດີໃຫ້ຜູ້ກ່ຽວເຮັດວຽກໃຫ້ ບລຈ ເຖິງ ທ້າຍເດືອນມິຖຸນາ ປີ 2025 ແລະ ຊ່ວຍ ບລຈ ໃນການຝຶກອົບຮົມບຸກຄະລາກອນໃຫ້ສາມາດມາຮັບຕຳແໜ່ງຫົວໜ້າພະແນກບັນຊີ-ການເງິນແທນ.

人才流失：为节约成本保上市业绩，基普贬值近 70%后，管理层仍顶住压力未普遍上调员工薪资，员工收入水平相较其它证券公司和金融机构存在较大差距，投行部门员工吉迪萨、财务部门会计布沙巴先后离职。财务部经理布帕提也提出辞职申请，经管理层做工作，同意为老-中证券工作到 2025 年 6 月底，协助老-中证券培养能够接替部门经理岗位的人才。

2) **ບຸກຄະລາກອນລຸ້ນສືບທອດ:** ຈັດແຈງໃຫ້ນັກສຶກສາທີ່ມາຈາກສາຂາວິຊາທີ່ກ່ຽວຂ້ອງຂອງມະຫາວິທະຍາໄລແຫ່ງຊາດລາວ ແລະ ສະຖາບັນທະນາຄານ ແລະ ນັກສຶກສາທີ່ຈົບການສຶກສາຈາກ ສປ ຈີນ ໃຫ້ມາຝຶກງານຢູ່ ບລຈ, ພ້ອມທັງເພີ່ມວິຊາການໃນວຽກງານທີ່ປຶກສາດ້ານການເງິນອີ 1 ທ່ານ ອີງຕາມຄວາມຕ້ອງການຂອງວຽກງານ. ກະກຽມສຳພາດບຸກຄະລາກອນ ແລະ ວຽກງານບຸກຄະລາກອນລຸ້ນສືບທອດ ເຊັ່ນ: ກອງທຶນ ແລະ ບັນຊີ-ການເງິນ ເປັນຕົ້ນ.

人才储备：安排老挝国立大学、银行学院相关专业学生和从中国留学回国的老挝高校毕业生到公司实习，根据工作需要新增一名投行业务工作人员。提前做好基金、财务等人才面试和人才储备工作。

3) ການຝຶກອົບຮົມບຸກຄະລາກອນ:

人才培训：

ນຳສົ່ງພະນັກງານເຂົ້າຮ່ວມການຝຶກອົບຮົມປະເພດຕ່າງໆທີ່ຈັດໂດຍ ສຄຄຊ, ຕລຊລ ແລະ ກະຊວງການເງິນຢ່າງຕັ້ງໜ້າ ເຊັ່ນ: ຝຶກອົບຮົມດ້ານລະບຽບກົດໝາຍຂອງນັກວິຊາຊີບທຸລະກິດຫຼັກຊັບທີ່ຮ່ວມກັນຈັດໂດຍ ສຄຄຊ ແລະ ຕລຊລ; ສຄຄຊ ໄດ້ຈັດກອງປະຊຸມຄົ້ນຄວ້າສຳມະນາສຶກສາລະບຽບກົດໝາຍທີ່ກ່ຽວຂ້ອງກັບນັກວິຊາຊີບທຸລະກິດຫຼັກຊັບ ແລະ ປະເມີນປະຈຳປີ, ການຝຶກອົບຮົມ “ວຽກງານບັນຊີ-ການເງິນທ້າຍປີ”, ດຳເນີນການຝຶກອົບຮົມການກວດສອບພາຍໃນທີ່ຈັດໂດຍ ບໍລິສັດ PwC Laos, ສຄຄຊ ໃນຖານະເປັນປະທານໝູນວຽນຂອງ ASEAN Capital Markets Forum (ACMF) ຮ່ວມກັນກັບມາດຕະຖານທົ່ວໄປຂອງບັນຊີສາກົນ ໃນການຈັດ ຝຶກອົບຮົມມາດຕະຖານທົ່ວໄປສາກົນດ້ານການລາຍງານເອກະສານລາຍງານການເງິນແບບຍືນຍົງ”; ຝຶກອົບຮົມນັກວິຊາຊີບປະເພດກອງທຶນທີ່ຈັດໂດຍຕະຫຼາດຫຼັກຊັບລາວ, ຝຶກອົບຮົມຫົວຂໍ້ “ການສ້າງແບບຈຳລອງການວິເຄາະທາງການເງິນ” ທີ່ຈັດໂດຍບໍລິສັດທີ່ປຶກສາ STP; ຝຶກອົບຮົມກ່ຽວກັບລາຍລະອຽດການປະຕິບັດຂອງການປັບຂຶ້ນອາກອນມູນຄ່າເພີ່ມທີ່ຈັດໂດຍກະຊວງການເງິນເປັນຕົ້ນ.

积极派员参加证管委、老交所和财政部组织的各类培训，如：证管委办公厅和老交所共同组织的证券从业人员法规培训；证管委办公厅组织的证券从业人员相关法规学习研讨会和年度考核、“年终财务工作”培训、委托普华永道老挝公司开展的内部审计培训、证管委办公厅作为东盟资本论坛轮值主席与国际会计通用准则基金联合举办“可持续财务报告国际通用准则培训”；老交所组织的基金从业人员培训、委托 STP 顾问公司开展的“财务分析建模”培训；财政部组织的增值税上调实施细则培训等。

2. ການສ້າງລະບຽບຄຸ້ມຄອງ

制度建设

ສຳເລັດກົດລະບຽບຂອງບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ, ຈັດແຈງໃຫ້ແຕ່ລະພະແນກລົງມືກະກຽມໃນການປັບປຸງລະບຽບ, ຄູ່ມືການເຮັດວຽກ, ຄຳແນະນຳດ້ານທຸລະກິດ ແລະ ເນື້ອໃນອື່ນໆຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ. ຈັດແຈງໃຫ້ພະແນກບໍລິຫານກອງທຶນສ່ວນບຸກຄົນລົງມືກະກຽມສ້າງກົດລະບຽບ, ລະບຽບພະແນກ ແລະ ຄຳແນະນຳຂັ້ນຕອນທາງທຸລະກິດຂອງບໍລິສັດກອງທຶນ.

完成《老-中证券公众公司章程》，安排各部门着手准备更新老-中证券公众公司部门制度、工作手册和业务指引等内容。安排私募基金管理部门着手准备拟成立基金公司章程、部门制度和业务流程指引。

ຄະນະອຳນວຍການຮຽກເປີດກອງປະຊຸມກັບພະແນກກວດກາພາຍໃນ, ນາຍໜ້າຊື້ ຂາຍຫຼັກຊັບ, ທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ເຕັກນິກຂໍ້ມູນຂ່າວສານ ແລະ ພະແນກອື່ນໆ, ເພື່ອໃຫ້ຮ່າງ ຄຳແນະນຳກ່ຽວກັບຊ່ອງທາງການຮັບຮ້ອງຮຽນຈາກຜູ້ລົງທຶນ ອີງຕາມຂໍ້ກຳນົດຂອງ ສຄຄຊ ພ້ອມທັງລາຍງານຕໍ່ ສຄຄຊ.

管理层召集监察、经纪、投行、信息技术等部门开会，根据证管委办公厅要求拟定《关于接受投资者申诉渠道指引》并上报证管委办公厅。

VI. ການສ້າງລະບົບຂໍ້ມູນຂ່າວສານ
信息系统建设

ບລຈ ໄດ້ບັນລຸຄວາມຄິດເຫັນເປັນເອກະພາບກັບ ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ (LDB-S) ໃນການວ່າຈ້າງ ບໍລິສັດ Zhejiang Tonghuashun Intelligent Technology Co., Ltd. ຮ່ວມກັນ ເພື່ອອະນຸຍາດໃຫ້ ບໍລິສັດ ລູກກໍຄື ບໍລິສັດ HITHINK INTERNATIONAL (SINGAPORE) PTE. LTD. ດຳເນີນການພັດທະນາລະບົບຊື້ ຂາຍຫຼັກຊັບເທິງມືຖື.

与老挝开发银行证券（LDB-S）就联合聘请浙江同花顺智能科技有限公司授权全资子公司核新国际（新加坡）私人有限公司[HITHINK INTERNATIONAL (SINGAPORE) PTE. LTD.]开发手机证券交易系统达成一致意见。

ການຊ່ວຍເຫຼືອ HITHINK INTERNATIONAL ໃຫ້ສຳເລັດການທົດສອບການເຊື່ອມຕໍ່ກັບຕະຫຼາດຫຼັກຊັບ ລາວ, ແລະໄດ້ຈັດພິທີລົງນາມເຊັນອອນໄລໃນ ສັນຍາວ່າດ້ວຍການພັດທະນາລະບົບຊື້ ຂາຍຫຼັກຊັບເທິງມືຖື ກັບ HITHINK INTERNATIONAL ໃນວັນທີ 18 ທັນວາ.

协助核新国际完成老交所行情连接测试，并于 12 月 18 日与核新国际举行《手机证券交易系统开发合同》线上签约仪式。

VII. ວຽກງານອື່ນທີ່ກ່ຽວພັນ
其它相关专项工作

1. ການຍ້າຍສຳນັກງານ ມາຕັ້ງຢູ່ເຂດເສດຖະກິດພິເສດ ບຶງທາດຫຼວງ
搬迁公司总部地址至塔銮湖特区

ແຕ່ງຕັ້ງຄະນະຮັບຜິດຊອບໃນການຍ້າຍສຳນັກງານ, ຜ່ານການສູ້ຊົນຂອງຫຼາຍຝ່າຍ, ໃນວັນທີ 20 ມິຖຸນາ ໄດ້ສຳເລັດການຍ້າຍສຳນັກງານ ບລຈ ມາຕັ້ງຢູ່ເຂດເສດຖະກິດພິເສດ ບຶງທາດຫຼວງ.

成立总部搬迁工作组，经多方努力，老-中证券于 6 月 20 日顺利搬迁到塔銮湖经济特区办公。

ຄ່າໃຊ້ຈ່າຍໃນການຍ້າຍສຳນັກງານ, ແຜນການຕົບແຕ່ງສຳນັກງານ 120,000 ໂດລາສະຫາລັດ, ການຈັດຕັ້ງປະຕິບັດຕົວຈິງ, ຄ່າອອກແບບ, ຄ່າຕົບແຕ່ງ ແລະ ລະບົບໄຟສຳຮອງລວມ 95,000 ໂດລາສະຫາລັດ, ຫຼຸດຄ່າໃຊ້ຈ່າຍຕາມແຜນໄດ້ 25,000 ໂດລາສະຫາລັດ.

搬迁费用方面，搬迁装修预算 12 万美元（约合 89.04 万元），实际执行过程中，设计加装修和柴油备电机房开支共计 9.5 万美元（约合 70.49 万元），节约预算 2.5 万美元（合 18.55 万元）。

ຜ່ານການສະເໜີຫາ ທະນາຄານ ແຫ່ງ ສປປ ລາວ ກ່ຽວກັບການຂໍຫຼຸດຄ່າເຊົ່າ ສາມາດຫຼຸດໄດ້ 26,750 ໂດລາສະຫາລັດ, ຄ່າໃຊ້ຈ່າຍທີ່ເກີດຂຶ້ນຈິງຕອນຢູ່ຕຶກຕະຫຼາດຫຼັກຊັບໃນປີ 2024 ແມ່ນ 34,500 ໂດລາສະຫາລັດ, ໃນຊ່ວງໄລຍະ

ເວລາຕິບແຕ່ງສຳນັກງານ ຢູ່ເຂດເສດຖະກິດພິເສດ ໄດ້ຮັບການຍົກເວັ້ນຄ່າເຊົ່າ 4 ເດືອນ, ຈ່າຍຄ່າເຊົ່າ ໃນປີ 2024 ຢູ່ເຂດ ພຽງແຕ່ 3 ເດືອນ ລວມເປັນເງິນ 4,712.50 ໂດລາສະຫາລັດ, ຄ່າເຊົ້າທັງໝົດຂອງສຳນັກງານໃນປີ 2024 ທຽບໃສ່ ປີຜ່ານມາ ສາມາດຫຼຸດຕົ້ນທຶນໄດ້ 65,787.50 ໂດລາສະຫາລັດ.

通过向央行申请租金减免节约 26,750 美元（约合 19.85 万元），2024 年实际在老交所产生租金 34,500 美元（约合 25.6 万元）。通过 4 个半月装修期免租金，2024 年实际在塔銮湖特区产生 3 个月租金 4,712.50 美元（约合 3.5 万元），全年办公场地租金较上年节约 65,787.5 美元（约合 48.81 万元）。

ດ້ານອາກອນກຳໄລ, ປີ 2024, ບລຈ ກຳໄລສຸດທິ ປະຕິບັດ 11,32 ຕື້ກີບ, ກຳໄລສຸດທິດັ່ງກ່າວໄດ້ລວມ ອາກອນ ກຳໄລ 20% ລວມເປັນ 2,264,159,646 ກີບ ທີ່ສາມາດຍົກເວັ້ນໄດ້ ອີງຕາມນະໂຍບາຍອາກອນຂອງ ຂສພ.

利润税方面，2024 年老-中证券实现净利润 113.21 亿基普（约合 384.28 万元），上述净利润已包括按照特区税收优惠政策，可全免 20%的利润税共计 2,264,159,646 基普（约合 76.86 万元）。

2. ວຽກງານກ່ຽວກັບການອອກຈາກການຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນາທຳລາວ ມະຫາຊົນ 退出老挝文旅集团项目相关工作

ໄດ້ຮ່ວມກັບ ບໍລິສັດ ຢູນນານເຫົ່ງສືເຊິ່ງລຸ້ຍໂຮນດິ້ງ ຈຳກັດ (ເອີ້ນຫຍໍ້ວ່າ “ຢູນນານເຫົ່ງສືເຊິ່ງລຸ້ຍ” ກ່ອນໜ້ານັ້ນໃສ່ ຊື່ວ່າ ບໍລິສັດ ຢູນນານ ຊ່ຽນຫານເນັດເວີກເທັກໂນໂລຢີ ຈຳກັດ) ປັບປຸງສັນຍາ ວ່າດ້ວຍການໂອນຮຸ້ນ ກຸ່ມບໍລິສັດ ທ່ອງ ທ່ຽວວັດທະນາທຳລາວ ມະຫາຊົນ, ໃນມູນຄ່າ 18,871,712,100 ກີບ ເພື່ອຊື້ຮຸ້ນຂອງ ບລຈ ທີ່ຖືຄອງຢູ່ໃນ ກຸ່ມບໍລິສັດ ທ່ອງທ່ຽວວັດທະນາທຳລາວ ມະຫາຊົນ (ຊື່ຫຍໍ້ວ່າ ກຸ່ມບໍລິສັດ ທ່ອງທ່ຽວວັດທະນາທຳລາວ) ຈາກສັດສ່ວນການຖືຮຸ້ນ ເດີມ 18.8676% ມາເປັນ 15.8676%, ເຫຼືອໄວ້ 3% ເພື່ອເປັນຕົ້ນທຶນຂອງ ບລຈ, ກຳນົດຄ່າທຳນຽມ 0.68% ໃນການ ໂອນຮຸ້ນໃໝ່ ລວມເປັນ 128,327,643 ກີບ ໃຫ້ເປັນຄວາມຮັບຜິດຊອບຂອງ ຢູນນານເຫົ່ງສືເຊິ່ງລຸ້ຍ.

与云南恒实诚睿控股有限公司（简称“云南恒实诚睿”，前身为云南千涵网络科技有限公司）更新《老挝文旅集团公众公司股权转让协议》，将 18,871,712,100 基普（约合 640.59 万元）收购老-中证券所持有的老挝文旅集团公众公司（简称“老挝文旅集团”）股权比例由 18.8676%下调为 15.8676%，剩余 3%股权作为老-中证券资金成本，重新约定 0.68%股权转让手续费，共计 128,327,643 基普（约合 4.36 万元）由云南恒实诚睿承担。

ບົນພື້ນຖານທີ່ກ່າວມາຂ້າງເທິງ, ຮຽກຮ້ອງໃຫ້ ຢູນນານເຫົ່ງສືເຊິ່ງລຸ້ຍ ອອກໜັງສືຮັບຮອງ ກ່ຽວກັບ ການຊຳລະມູນ ຄ່າຮຸ້ນ ຮັບປະກັນການໂອນຮຸ້ນສຳເລັດພາຍໃນວັນທີ 30 ເດືອນ ກັນຍາ. ເນື່ອງຈາກ ຢູນນານເຫົ່ງສືເຊິ່ງລຸ້ຍ ບໍ່ສາມາດ ປະຕິບັດຕາມຄຳໝັ້ນສັນຍາໃນການຊຳລະ, ບລຈ ໄດ້ຮຽກຮ້ອງໃຫ້ ຜູ້ຖືຮຸ້ນໃຫຍ່ຂອງ ຢູນນານເຫົ່ງສືເຊິ່ງລຸ້ຍ ຄື ທ່ານ ເນ້ຍ ເລ້ ອອກໃບຢັ້ງຢືນເງິນຝາກ ຢູ່ທະນາຄານ. ກ່ຽວກັບການຊື້ຮຸ້ນຄັ້ງນີ້, ເຫັນດີໃຫ້ບໍລິສັດດັ່ງກ່າວແຍກຊຳລະຈ່າຍຕາມ

ສະພາບຕົວຈິງ, ແຕ່ວ່າ ບລຈ ຕ້ອງລໍຖ້າໃຫ້ຊຳລະຄົບຖ້ວນຕາມຈຳນວນທີ່ຕົກລົງໄວ້ໃນສັນຍາກ່ອນ ຈະດຳເນີນການໂອນຮຸ້ນ ແລະ ປ່ຽນຊື່ຜູ້ຖືຮຸ້ນໃຫ້. ໃນເດືອນ ພະຈິກ ບລຈ ໄດ້ຮັບເງິນຄັ້ງທຳອິດຈາກ ຢຸນນານເຫົ່ງສີເຊິ່ງລຸ້ຍ ເປັນຈຳນວນ 1 ຕື້ກີບ, ປະຈຸບັນ ຢູ່ໃນຂັ້ນຕອນຕິດຕາມ ແລະ ດຳເນີນການ.

在此基础上，要求云南恒实诚睿出具《关于支付股份收购款项的承诺函》，承诺股权收购款项支付截至日期为 9 月 30 日。由于云南恒实诚睿未能按照承诺函付款，老-中证券要求云南恒实诚睿大股东聂磊出具银行存款证明。关于股权收购款项，同意该公司根据实际情况分期支付，但老-中证券需待收齐合同约定股权收购全部款项后方才履行股权过户和更名手续。11 月，老-中证券收到云南恒实诚睿收购老-中证券所持老挝文旅集团股权第一笔款项 10 亿基普（约合 33.94 万元），目前相关催款工作正在进行。

3. ວຽກງານກ່ຽວກັບການອອກຈາກການຖືຮຸ້ນໃນບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ
退出万象中心项目相关工作

ໄດ້ປຶກສາຫາລືກັບ ທ່ານ ເຊ້ຍ ຫົວຖິງ ທີ່ເປັນຜູ້ຕາງໜ້າຂອງ ບໍລິສັດ ລົງທຶນ ຫົວສ້ໍ ລົງທຶນ, ແນະນຳຂັ້ນຕອນການເຂົ້າຈົດທະບຽນຂອງ ສປປ ລາວ ແລະ ສິງກາໂປ, ປຶກສາຫາລືກ່ຽວກັບການຜັກດັນໃຫ້ ບໍລິສັດ ດັ່ງກ່າວລິເລີ່ມວຽກງານການກວດສອບສະຖານະຂອງ ບໍລິສັດ ວຽງຈັກເຊັນເຕີ ລາວ ມະຫາຊົນ ກ່ອນການເຂົ້າຊື້ກິດຈະການ. ໄດ້ປຶກສາຫາລືກັບຜູ້ອຳນວຍການຂອງ ວຽງຈັນເຊັນເຕີ ທ່ານ ຫວາງ ເຫວ້ຄຸ່ນ ກ່ຽວກັບແຜນໃນການຂາຍຊັບສິນ ເພື່ອນຳເງິນທີ່ໄດ້ມາປັນຜົນ ແລະ ຫຼຸດຈຳນວນຮຸ້ນຂອງ ວຽງຈັນເຊັນເຕີ ລົງ.

与华锴投资公司代表谢华桐会谈，介绍老挝和新加坡上市流程，讨论推动该公司启动收购万象中心项目前期尽调工作。与万象中心总经理王玮坤就万象中心通过出售部分商业后进行分红、缩股的方案进行讨论。

4. ການຫາໂຄງການສຳຮອງໄວ້ ໃນວຽກງານ ທີ່ປຶກສາດ້ານການເງິນ
投行项目储备

ຈຸດສຸມ ຕິດຕາມວຽກບາງໂຄງການດັ່ງນີ້: ວຽກງານເປັນທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນ IPO ຂອງ ທະນາຄານ BIC, ພ້ອມທັງໄດ້ນຳສົ່ງສັນຍາທີ່ປຶກສາດ້ານການເງິນ ພ້ອມທັງລາຄາໃຫ້ BIC ພິຈາລະນາແລ້ວ, 1. ວຽກງານເປັນທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນ IPO ຂອງ JDB, ສອງທະນາຄານແມ່ນໄດ້ເປັນເອກະພາບທີ່ຈະຮ່ວມມືກັບ ບລຈ, 2. ວຽກງານເປັນທີ່ປຶກສາດ້ານການເງິນ ໃນການອອກຈຳໜ່າຍຮຸ້ນກູ້, 3. ບໍລິສັດຫຼັກຊັບໄດ້ສຳເລັດການເຮັດແຜນເບື້ອງຕົ້ນແລ້ວ.

重点跟进以下几个项目：1、老挝投资和商业银行（BIC）IPO 财务顾问，已向 BIC 银行提交财顾方案及报价；2、发联合发展银行（JDB）IPO 财务顾问，双方就该行申请 IPO 达成合作意向；3、LOCA 网约车公司发行企业债，三家证券公司已完成方案初步设计。

VIII. ການຮ່ວມມືກັບພາຍນອກ

对外合作

1. ວຽກງານການຮ່ວມມືກັບ ຄຄຊ ແລະ ຕລຊລ

与证管委、老交所相关工作

ອີງຕາມການເຊື້ອເຊີນຈາກ ສຳນັກງານງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເຂົ້າຮ່ວມງານສຳມະນາປຶກສາຫາລືໃນຮູບແບບອອນລາຍ ທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສສປ ລາວ ແລະ ກົມພົວພັນວຽກງານສາກົນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຂອງ ສປ ຈີນ ພາຍໃຕ້ຫົວຂໍ້ “ຮຸ້ນກູ້ສີຂຽວ, ສັງຄົມ ແລະ ຄວາມຍືນຍົງ” ພ້ອມທັງ ຫົວຂໍ້ “ການຜັກດັນບັນດາບໍລິສັດ ອອກຈຳໜ່າຍຫຼັກຊັບ ແລະ ມີສ່ວນຮ່ວມໃນຕະຫຼາດທຶນ” ແລະ ບລຈ ເອງ ໄດ້ປະກອບສ່ວນໃນການແປພາສາ ໃຫ້ແກ່ງານສຳມະນາໃນຄັ້ງນີ້. ຮອງກົມຮ່ວມມືສາກົນຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສປ ຈີນ ທ່ານ ທູ ຊ່ຽນຊຸນ ແລະ ຮອງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສປປ ລາວ ທ່ານ ນາງ ອາລຸນນາ ສີວັນທອງ ເປັນປະທານຮ່ວມກອງປະຊຸມ ແລະ ກ່າວເປີດ.

应证管委办公厅邀请，参加证管委办公厅与中国证监会国际合作司“绿色、社会和可持续债券”暨“鼓励证券发行主体和机构投资者参与证券市场”主题线上研讨会，并为会议提供翻译支持。中国证监会国际合作司副司长涂先群、老挝证管委办公厅副主任阿伦娜·西翁通出席会议并致辞。

ໄດ້ຮ່ວມໃນວຽກໂຄສະນາເຜີຍແຜ່, ການຈັດກິດຈະກຳ ແລະ ງານສຳມະນາຕ່າງໆ ທີ່ທາງ ສຳນັກງານ ຄຄຊ ແລະ ຕລຊລ ໄດ້ຈັດຂຶ້ນເຊັ່ນ: ວຽກງານ ສຄຄຊ ເປັນປະທານ ຄະນະກຳມະການພັດທະນາຕະຫຼາດທຶນອາຊຽນ, ຮ່ວມກັບ ທະນາຄານພັດທະນາອາຊຽນ ເພື່ອຈັດງານ “ສະເຫຼີມສະຫຼອງການສ້າງຕັ້ງ ຄະນະກຳມະການພັດທະນາຕະຫຼາດທຶນອາຊຽນ ຄົບຮອບ 20 ປີ”, ການຈັດງານຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກ່ຽວກັບ “ງານສຳມະນາການພັດທະນາຕະຫຼາດທຶນສີຂຽວຍືນຍົງ ຂອງ ສປປ ລາວ” ສຳເລັດການເຜີຍແຜ່ວຽກງານຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງເງິນທຶນໃຫ້ແກ່ການກໍ່ການຮ້າຍທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຈັດຂຶ້ນ, ທະນາຄານພັດທະນາອາຊີ, ກອງທຶນ Trust ຂອງຂອງທະນາຄານ ພັດທະນາ ອາຊີ ແລະ ເລຂາທິການອາຊຽນຈັດຂຶ້ນ ໂດຍການລິເລີ່ມວຽກງານການອອກການອອກຈຳໜ່າຍຮຸ້ນກູ້ ແລະ ຈົດທະບຽນຮຸ້ນກູ້ ຂອງວິສາຫະກິດ ຢູ່ ສປປ ລາວ ແລະ ການຝຶກອົບຮົມໃຫ້ກັບນັກສຶກສາຢູ່ມະຫາວິທະຍາໄລ ແລະ ໃຫ້ຄວາມຮູ້ແກ່ນັກລົງທຶນທົ່ວໄປ ແລະ ອື່ນໆ. ເຂົ້າຮ່ວມງານທີ່ພົບປະນັກລົງທຶນຂອງບໍລິສັດຈົດທຽນໃນຕະຫຼາດຫຼັກຊັບ ແລະ ນັກລົງທຶນທົ່ວໄປ ທີ່ຕະຫຼາດຫຼັກຊັບເປັນຜູ້ຈັດ, ໄປເຜີຍແຜ່ວຽກງານຕະຫຼາດທຶນ ຢູ່ກະຊວງສຶກສາ, ສະຖາບັນການທະນາຄານ, ແຂວງສະຫວັນນະເຂດ ແລະ ນະຄອນປາກເຊ ແຂວງ ຈຳປາສັກ, ຮ່ວມກິດຈະກຳການແຂ່ງຂັນ ການຊື້ ຂາຍຮຸ້ນ ເພື່ອສະເຫຼີມສະໜອງການສ້າງຕັ້ງຕະຫຼາດທຶນຄົບຮອບ 14 ປີ ຢູ່ຫຼາຍສະຖານທີ່ເຊັ່ນ ເຂດເສດຖະກິດພິເສດບຶງທາດຫຼວງ, ຫ້າງວຽກຈັນເຊັນເຕີ, ນອກນັ້ນ, ຍັງໄດ້ເຂົ້າຮ່ວມງານ ທີ່ ຕະຫຼາດຫຼັກຊັບລາວ ແລະ ທະນາຄານພັດທະນາ ອາຊີ ຈັດຂຶ້ນພາຍໃຕ້ຫົວຂໍ້ “ງານສຳມະນາປຶກສາຫາລືການນຳໃຊ້ສະກຸນເງິນຕາທ້ອງຖິ່ນ” ແລະ “ການແກ້ໄຂບັນການລະດົມທຶນສະກຸນເງິນທ້ອງຖິ່ນ” ແລະ ບັນຫາອື່ນໆ.

参加证管委办公厅、老交所组织的各项资本市场宣传、宣讲活动及研讨会。如：证管委办公厅作为东盟资本论坛轮值主席与东盟资本论坛、亚洲开发银行联合举办“庆祝东盟资本论坛成立 20 周年暨东盟资本论坛国际会议”，证管委办公厅组织的“扩大老挝人民民主共和国资本市场绿色和可持续投资研讨会”、“落实与证券行业相关反洗钱、反资助恐怖主义工作”文件传达会议、证管委办公厅主办，亚洲开发银行、亚行信托担保投资基金和东盟秘书处协办的“启动老挝企业债市场”论坛及为在校学生和投资者开展“股票投资基础知识”培训等。参加老交所组织的“上市公司与投资者见面会”，赴教育部、银行学院、南部沙湾拿吉省、巴色省开展资本市场宣传，在塔銮湖经济特区、万象中心设展，开展股票投资模拟交易有奖赛等庆祝资本市场成立 14 周年系列活动，及老交所联合亚洲开发银行组织的“财政部本国货币使命”研讨会、“老挝本币融资解决方案研讨会”等。

ມີຄວາມກະຕືລືລົ້ນ ໃນການເຂົ້າຮ່ວມໃນ ຄະນະກຳມະການຊີ້ນຳວຽກງານຕະຫຼາດທຶນ ທີ່ ທະນາຄານແຫ່ງ ສປປ ລາວ ເປັນຜູ້ຊີ້ນຳ ແລະ ສະໜັບສະໜຸນວຽກງານຂອງ ຄະນະ, ເຂົ້າຮ່ວມ ເປັນຄະນະຄົ້ນຄວ້າ ແລະ ຈັດກອງປະຊຸມຫຼາຍຄັ້ງ ກ່ຽວກັບວຽກງານການສ້າງຕັ້ງກະດານຮອງ ທີ່ ສຳນັກງານ ຄຄຊ, ຕລຊລ ແລະ ບັນດາບໍລິສັດຫຼັກຊັບ ພາຍໃຕ້ການຊີ້ນຳ ຂອງ ທະນາຄານ ແຫ່ງ ສປປ ລາວ, ເຂົ້າຮ່ວມວຽກງານ ຄາບອນເຄດິດ ທີ່ທະນາຄານ ແຫ່ງ ສປປ ລາວ ແລະ GGGI ປະຈຳ ສປປ ລາວ ຈັດຂຶ້ນ.

积极加入央行牵头成立的“关于研究成立老挝资本市场协会指导委员会和协助工作次委会”，参加央行组织证管委办公厅、老交所、各证券公司召开有关筹建证券市场副板专题工作会议，央行与全球绿色增长研究所驻老挝办事处联合举办的“碳信用”论坛等活动。

2. ການຮ່ວມມືກັບບໍລິສັດຫຼັກຊັບອື່ນ
与其它证券公司合作

ຮ່ວມກັບ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ແລະ ຄະນະອຳນວຍການຂອງລັດວິສາຫະກິດການບິນລາວ ພ້ອມທັງເປີດກອງປະຊຸມກັບ ນັກລົງທຶນຍຸດທະສາດຈາກ ສປ ຈີນ ເພື່ອປຶກສາຫາລື ແລະ ແລກປ່ຽນກ່ຽວກັບ ຂອບຂອງລາຄາ ໃນການປະເມີນມູນຄ່າຮຸ້ນຂອງ ການບິນລາວ.

联合外贸银行-恭泰证券与老挝航空管理层、中方意向战略投资机构在老挝航空开会，交流老挝航空公司估值区间。

ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ໄດ້ເຊີນ ບລຈ ເຂົ້າຮ່ວມຢ້ຽມຢາມ ບໍລິສັດ Pretrolimix ເພື່ອປຶກສາຫາລືວຽກງານການປະເມີນມູນຄ່າຮຸ້ນຂອງ ບໍລິສັດ ແລະ ເປັນທີ່ປຶກສາດ້ານການເງິນ.

外贸银行-恭泰证券邀请老-中证券共同拜访 Pretrolimix 石油公司，商谈承揽该项目股权价值评估和融资顾问业务。

ແຜນການດຳເນີນທຸລະກິດປະຈຳປີ 2025

2025 年年度工作计划

ບໍລິສັດຫຼັກຊັບ ລາວ-ຈີນ ມີແຜນການດຳເນີນທຸລະກິດ ປະຈຳປີ 2025 ໂດຍເນັ້ນໃສ່ບາງວຽກງານດັ່ງລຸ່ມນີ້:

老-中证券计划在 2025 年度重点做好以下几个方面的工作：

I. ສຳເລັດການອອກຈຳໜ່າຍຮຸ້ນ IPO ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ

完成老-中证券 IP0 并在老交所上市

ໃນໄຕມາດ 1 ຂອງປີ 2025 ໃຫ້ສຳເລັດການອະນຸມັດການອອກຈຳໜ່າຍຮຸ້ນ ແລະ ເຮັດການໂຄສະນາເຜີຍແຜ່, ໃນເດືອນ ເມສາ ສາມາດສຳເລັດການອອກຈຳໜ່າຍຮຸ້ນ ແລະ ໃນເດືອນ ພຶດສະພາ ສາມາດສຳເລັດການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ.

计划于 2025 年 1 季度完成 IP0 审批和路演工作，4 月份完成新股发行工作，5 月份在老交所上市。目前已完成发行上市的所有工作。

II. ສ້າງຕັ້ງບໍລິສັດ ບໍລິຫານກອງທຶນເພື່ອການລົງທຶນ

成立投资基金管理公司

ນຳໃຊ້ແຫຼ່ງທຶນຈາກການລະດົມທຶນ, ພາຍໃນໄຕມາດ 3 ໃຫ້ສາມາດສ້າງຕັ້ງ ບໍລິສັດ ບໍລິຫານກອງທຶນເພື່ອການລົງທຶນ, ສູ້ຊົນ ໃຫ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ບໍລິຫານກອງທຶນຈາກ ສຄຄຊ ແລະ ເລີ່ມດຳເນີນງານ. ຮ່ວມກັບ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ເພື່ອສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງກອງທຶນປະກັນໄພ ຂຶ້ນ.

用好上市募集资金，3 季度投资成立投资基金管理公司，争取尽快获得业务经营许可并开展实际业务。与财政部政府投资企业和保险管理司共同研究设立保险投资基金可行性。

III. ດຳເນີນງານໃນໂຄງການທີ່ສຳຄັນ

做好重点项目

ໃຫ້ສຳເລັດການເຊັນສັນຍາເປັນທີ່ປຶກສາດ້ານການເງິນ ກັບ ທະນາຄານ JDB ແລະ ທະນາຄານ BIC ໃນຫົກເດືອນຕົ້ນປີ, ສູ້ຊົນໃຫ້ສຳເລັດວຽກງານເປັນທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳ ໜ່າຍຮຸ້ນ IPO 1-2 ໂຄງການ ໃນປີ 2025, ຮ່ວມກັບ 3 ບໍລິສັດຫຼັກຊັບ ເປັນທີ່ປຶກສາດ້ານການເງິນໃຫ້ກັບ ບໍລິສັດ LOCA ໃນການອອກຈຳໜ່າຍຮຸ້ນກູ້. ພາຍໃນ ໄຕມາດ 3 ສາມາດສຳເລັດການອອກຈາກການຖືຄອງຮຸ້ນໃນ ກຸ່ມບໍລິສັດ ທ່ອງທ່ຽວອັດທະນາທຳ ລາວ ມະຫາຊົນ.

上半年完成和 JDB、BIC 银行 IPO 财务顾问签约工作，争取 2025 年完成 1-2 个 IPO 财务顾问和承销业务。三家证券公司共同协助 LOCA 网约车公司完成企业债发行工作。3 季度完成从文旅集团项目退出。

IV. ໃຫ້ການຮ່ວມມື ແລະ ສະໜັບສະໜຸນ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ເພື່ອໃຫ້ສຳເລັດບາງໜ້າວຽກທີ່ສຳຄັນ

支持配合证管委办公厅和老交所完成几项重要工作

ສະໜັບສະໜຸນ ສຄຄຊ ໃຫ້ເຂົ້າເປັນສະມາຊິກຄະນະກຳມະການຄຸ້ມຄອງຫຼັກຊັບສາກົນ, ສະໜັບສະໜຸນ ຄຳນັກງານ ຄຄຊ ສ້າງຕັ້ງສະມາຄົມວຽກງານຫຼັກຊັບ, ກະຕືລືລົ້ນໃນການເຂົ້າຮ່ວມສະມາຄົມ; ສະໜັບສະໜຸນການສ້າງກະດານຮອງ ຂອງຕະຫຼາດຫຼັກຊັບລາວ; ສະໜັບສະໜຸນວຽກງານການເງິນສີຂຽວທີ່ ຄຄຊ ເປັນຜູ້ຜັກດັນ; ຊ່ວຍເຫຼືອຕະຫຼາດຫຼັກຊັບລາວ ແລະ ຕະຫຼາດຫຼັກຊັບ ເຊັນເຈ້ຍ ໃນການເຊັນບົດບັນທຶກຄວາມເຂົ້າໃຈ MOU.

支持老挝加入国际证监会组织；支持证管委办公厅设立老挝资本市场协会，积极支持公司加入协会；支持老交所成立副板；支持证管委主推绿色债项目；协助老交所与深交所续签合作备忘录。

V. ເປັນທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍພັນທະບັດລັດຖະບານ ສະກຸນເງິນຢວນ

做好人民币国债财务顾问和代销业务

ນຳໃຊ້ພື້ນຖານການເປັນທີ່ປຶກສາດ້ານການເງິນ ແລະ ຕົວແທນຈຳໜ່າຍພັນທະບັດລັດຖະບານສະກຸນເງິນຢວນ ໃຫ້ກັບ ກະຊວງການເງິນ, ຮ່ວມມືກັບທະນາຄານແຫ່ງປະເທດຈີນ (ຮົ່ງກົ່ງ) ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ເພື່ອຜັກດັນ ລັດຖະບານແຫ່ງ ສປປ ລາວ ອອກຈຳໜ່າຍຮຸ້ນກູ້ແພນດ້າ ຫຼື ຮຸ້ນກູ້ໜຶ່ງແລວໜຶ່ງເສັ້ນທາງ.

在做好人民币国债财务顾问和代销业务的基础上，与中国银行探讨推动老挝政府在中国发行熊猫债或“一带一路”债券可行性。

VI. ສຶບຕໍ່ສຶກສາໂອກາດຄວາມເປັນໄປໄດ້ໃນການສ້າງຕັ້ງ ສາຂາ ບລຈ ຢູ່ ເຂດເສດຖະກິດພິເສດ ບໍ່ເຕນ

进一步调研在磨丁设立分公司或营业部可行性

ຈັດສັນເວລາທີ່ເໝາະສົມໃນການເຊີນ ທະນາຄານ ສົ່ງເສີມກະສິກຳ ແລະ ບລຈ ໄປຢ້ຽມຢາມເຂດເສດຖະກິດພິເສດ ບໍ່ເຕນ ເພື່ອເບິ່ງສະພາບການລົງທຶນຂອງເຂດ, ຍາດແຍ່ງການຮ່ວມມືກັບ ທະນາຄານ ສົ່ງເສີມກະສິກຳ ເພື່ອສ້າງຕັ້ງ ສາຂາ ຫຼື ໜ່ວຍບໍລິການ.

适时邀请农业促进银行股东方和老-中证券共同赴磨丁考察特区投资环境，争取与农业促进银行共同在磨丁设立分支机构或营业部。

VII. ສິ່ງທ້າທາຍ ແລະ ບັນຫາທີ່ພົບເຫັນ

面临的困难和挑战

1. **ຄວາມບໍ່ແນ່ນອນຂອງການຈັດຕັ້ງປະຕິບັດນະໂຍບາຍອາກອນຂອງເຂດເສດຖະກິດພິເສດ**
   特区税收政策执行层面的不确定性

ກ່ອນທີ່ຈະຕັດສິນໃຈຍົກຍ້າຍສຳນັກງານໄປຕັ້ງຢູ່ເຂດສະຖະກິດພິເສດບຶງທາດຫຼວງ, ບລຈ ໄດ້ເຄີຍເຮັດໜັງສືສະເໜີໄປຫາ ຄະນະກຳມະການຄຸ້ມຄອງ ຂສພ ນະຄອນຫຼວງວຽງຈັນໃນ ວັນທີ 9 ສິງຫາ 2021, ເພື່ອສອບຖາມ ແລະ ຢືນຢັນວ່າ ຖ້າ ບລຈ ຍົກຍ້າຍໄປຢູ່ ຂສພ ບຶງທາດຫຼວງ ແລ້ວຈະສາມາດໄດ້ຮັບນະໂຍບາຍຍົກເວັ້ນອາກອນ ຄືແນວໃດ. ອີງຕາມຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ວ່າດ້ວຍນະໂຍບາຍສົ່ງເສີມເພີ່ມເຕີມ ຂອງການລົງທຶນຢູ່ເຂດເສດຖະກິດສະເພາະ ບຶງທາດຫຼວງ ແລະ ຂພສ ໃນຂອບເຂດທົ່ວປະເທດ, ສະບັບເລກທີ 73/ນຍ, ລົງວັນທີ 28 ກັນຍາ 2015 (ເອກະສານຄັດຕິດ 1), ຈາກນັ້ນກໍມີໜັງສືແຈ້ງຕອບຫາ ບລຈ ຢ່າງເປັນທາງການ (ເອກະສານຄັດຕິດ 2) ໃນວັນທີ 2 ກັນຍາ 2021 ແລະ ໄດ້ຢືນຢັນວ່າ ອີງຕາມຂໍຕົກລົງຂອງທ່ານນາຍົກດັ່ງກ່າວ, ບລຈ ສາມາດຮັບນະໂຍບາຍຍົກເວັ້ນອາກອນກຳໄລດັ່ງນີ້: “ໃນມາດຕາ 4 ວ່າດ້ວຍອາກອນກຳໄລ: ກິດຈະການບໍລິການ ໄດ້ຮັບຍົກເວັ້ນອາກອນກຳໄລໃນໄລຍະ 2 ປີ, ພາຍຫຼັງສິ້ນສຸດໄລຍະເວລາການຍົກເວັ້ນອາກອນກຳໄລແລ້ວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍສ່ວຍສາອາກອນ;” ໃນບົດລາຍງານການກວດສອບບັນຊີ ບລຈ ປີ 2024 ທີ່ ບໍລິສັດກວດສອບ EY Lao ອອກໃຫ້ ກໍ່ອີງຕາມໜັງສືແຈ້ງຕອບດັ່ງກ່າວໄລ່ລວມກຳໄລສຸດທິຄືກັນ.

在老-中证券决策搬迁至塔銮湖经济特区以前，曾于 2021 年 8 月 9 日向万象市经济特区管理委员会发出《征询函》，了解确认老-中证券搬迁至塔銮湖经济特区可以享受哪些税收优惠政策。万象市经济特区管理委员会根据 2015 年 9 月 28 日颁布的《关于塔銮湖经济专区和全国经济特区增加投资促进政策的总理令》([总理]第 73 号)(详见附件 1)，于 2021 年 9 月 2 日正式复函老-中证券（详见附件 2)，明确老-中证券可享受上述总理令“第四条 利润税：服务项目免缴 2 年利润税，免税期结束后，按照《税法》执行;”之税收减免优惠。审计机构安永老挝为老-中证券出具的 2024 年度审计报告也据此统计净利润。

ແຕ່ໃນການປະຕິບັດຕົວຈິງ, ເນື່ອງຈາກກົມອາກອນຂອງກະຊວງການເງິນໄດ້ອອກໜັງສືແຈ້ງຕອບມາຍັງ ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ ກ່ຽວກັບການບໍ່ເຫັນດີໃຫ້ຮັບນະໂຍບາຍອາກອນຂອງເຂດເສດຖະກິດພິເສດ, ເຮັດໃຫ້ສອງບໍລິສັດທີ່ຍົກຍ້າຍຈາກ ຕລຊລ ມາຕັ້ງຢູ່ ຂສພ ບຶງທາດຫຼວງ ນຳກັນ, ທີ່ໄດ້ຮັບໜັງສືແຈ້ງຕອບຈາກຄະນະກຳມະການຄຸ້ມຄອງ ຂສພ ນະຄອນຫຼວງວຽງຈັນ ແລະ ກົມອາກອນກະຊວງການເງິນ ແມ່ນມີການຂັດແຍ້ງກັນ. ດັ່ງນັ້ນ, ບລຈ ໄດ້ເປັນຕົວແທນຂອງສອງບໍລິສັດຫຼັກຊັບ ສະເໜີຫາ ຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດ ເພື່ອເປີດກອງປະຊຸມປຶກສາຫາລືກັບກົມທີ່ກ່ຽວຂ້ອງ, ເພື່ອປຶກສາຫາລືວຽກງານການຈັດຕັ້ງປະຕິບັດນະໂຍບາຍອາກອນຂອງເຂດພິເສດ. ປະຈຸບັນ, ຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ ໄດ້ນຳເອົາວຽກງານດັ່ງກ່າວລາຍງານຕໍ່ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດແລ້ວ.

但在具体实践中，由于财政部税务司不同意外贸银行-恭泰证券享受特区税收优惠政策申请，导致同是从老交所搬迁至塔銮湖经济特区的两家证券公司，分别从万象市特区管理委员会和从财政部税务司获得的批复口径存在矛盾。为此，老-中证券已代表两家证券公司请特区管理委员会尽快召开相关部门联席会议，讨论特区税收优惠政策执行办法事。

目前，万象市特区管理委员会已将相关事项向上级部门计划投资部特区促进及管理办公室汇报。

2. ເງິນເດືອນພະນັກງານຍັງຕ່ຳ, ບໍ່ສາມາດຮັກສາພະນັກງານທີ່ມີຄວາມຮູ້ຄວາມສາມາດໄດ້

员工薪资较低，难以留住人才

ປະຈຸບັນ, ລະດັບເງິນເດືອນພະນັກງານ ບລຈ ຍັງຢູ່ລະດັບຕ່ຳກວ່າຄ່າສະເລ່ຍຂອງພະນັກງານໃນຂະແໜງການທະນາຄານ, ໃນໄລຍະຍາວແມ່ນຍາກຕໍ່ການດຶງດູດ ແລະ ຮັກສາພະນັກງານທີ່ມີຄວາມຮູ້ຄວາມສາມາດໄວ້ໄດ້. ຕາມແຜນແມ່ນຈະແກ້ໄຂບັນຫາຂ້າງເທິງຕາມການພັດທະນາຂອງທຸລະກິດ, ພາຍຫຼັງ ບລຈ ສຳເລັດການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວ, ສະເໜີສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ ແຜນການປັບປຸງນະໂຍບາຍເງິນເດືອນ ແລະ ສະຫວັດດີການຂອງພະນັກງານຕາມສະພາບຕົວຈິງ, ບົນພື້ນຖານພະຍາຍາມການເພີ່ມລາຍຮັບ ແລະ ກຳໄລຂອງ ບລຈ.

目前，老-中证券员工薪资大幅度低于行业平均水平，长远看难以吸引和留住优秀人才。计划在发展中逐步解决上述问题，拟在老-中证券成功上市后，在努力增加公司收入和利润水平的基础上，提请董事会和股东大会审议根据实际情况合理上调员工薪资待遇。

ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2025.

特提交股东大会审议上述老-中证券 2024 年度工作报告暨 2025 年度经营计划。

ເອກະສານຄັດຕິດ 1: ຂໍຕົກລົງ ຂອງນາຍົກລັດຖະມົນຕີ ວ່າດ້ວຍນະໂຍບາຍສິ່ງເສີມເພີ່ມເຕີມ ຂອງການລົງທຶນຢູ່ເຂດເສດຖະກິດພິເສດ ບຶງທາດຫຼວງ ແລະ ຂພສ ໃນຂອບເຂດທົ່ວປະເທດ

附件 1：关于塔銮湖经济专区和全国经济特区增加投资促进政策的总理令

ເອກະສານຄັດຕິດ 2: ໜັງສືແຈ້ງຕອບ ອະທິບາຍແຈ້ງນະໂຍບາຍສິ່ງເສີມດ້ານພາສີ-ສ່ວຍສາອາກອນ ແລະຜູ້ທີ່ໄດ້ຮັບອະນຸຍາດລົງທຶນຢູ່ເຂດເສດຖະກິດພິເສດ ບຶງທາດຫຼວງ

附件 2：关于获批在塔銮湖经济特区投资者可享税收优惠政策的复函

ໝາຍເຫດ: ອັດຕາແລກປ່ຽນແມ່ນອີງຕາມ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ໃນວັນທີ 31 ທັນວາ 2024

1 ຢວນເທົ່າກັບ 2,946.00 ກີບ, 1 ໂດລາສະຫາລັດເທົ່າກັບ 21,859.00 ກີບ.

注：本文汇率根据老挝外贸银行 2024 年 12 月 31 日外汇牌价

1 元=2,946.00 基普，1 美元=21,859.00 基普

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 – 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານຂອງນັກກວດສອບອິດສະຫຼະ	4 – 6
ໃບລາຍງານຖານະການເງິນ	7 – 8
ໃບລາຍງານຜົນການດຳເນີນງານ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	10
ໃບລາຍງານກະແສເງິນສົດ	11 – 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	13 – 28

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດເປັນບໍລິສັດມະຫາຊົນທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍວ່າດ້ວຍ ວິສາຫະກິດແຫ່ງ ສປປ ລາວ ແລະ ໃບທະບຽນວິສາຫະກິດເລກທີ 0631 ອອກໂດຍ ກະຊວງແຜນການ ແລະ ການລົງທຶນໃນວັນທີ 21 ມິຖຸນາ 2013 ແລະ ໃບອະນຸຍາດດຳເນີນທຸລະກິດເລກທີ 010 ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບແຫ່ງ ສປປ ລາວ (ຄຄຊ) ໃນວັນທີ 16 ພະຈິກ 2013. ໃບທະບຽນວິສາຫະກິດສະບັບປັບປຸງໃໝ່ສະບັບເລກທີ 0010/ຈທວ ຂອງ ບໍລິສັດໄດ້ອອກໃຫ້ໂດຍຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນວັນທີ 25 ຕຸລາ 2024 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 043/ຄຄຊ ອອກໂດຍສຳນັກງານຄະນະກຳມະການຫຼັກຊັບລາວ (ຄຄຊ) ໃນວັນທີ 5 ທັນວາ 2024.

ບໍລິສັດໄດ້ຮັບການສ້າງຕັ້ງຂຶ້ນໂດຍຜູ້ຖືຮຸ້ນ 3 ພາກສ່ວນ: (i) ທະນາຄານສົ່ງເສີມກະສິກຳ, (ii) ບໍລິສັດ ລາວອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ເຊິ່ງສອງບໍລິສັດດັ່ງກ່າວແມ່ນສ້າງຕັ້ງຢູ່ ສປປ ລາວ ແລະ (iii) ບໍລິສັດຫຼັກຊັບ ຮຸ້ນສ່ວນປາຊີຟິກ ຈຳກັດ ແມ່ນຖືກສ້າງຕັ້ງຢູ່ ສາທາລະນະລັດ ປະຊາຊົນຈີນ, ໂດຍມີສັດສ່ວນການຖືຮຸ້ນໃນອັດຕາ 41%, 20% ແລະ 39% ຕາມລຳດັບ.

ທຶນຈົດທະບຽນສ້າງຕັ້ງບໍລິສັດແມ່ນ 100,000,000,000 ກີບ. ນະວັນທີ 31 ທັນ 2024, ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດ ແມ່ນ 100,000,000,000 ກີບ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການທີ່ປຶກສາທາງດ້ານການເງິນ; ທີ່ປຶກສາດ້ານການລົງທຶນ ກ່ຽວກັບຫຼັກຊັບ; ນາຍໜ້າຊື້ ຂາຍ ຫຼັກຊັບ ຕາມການສັ່ງຊື້ ຫຼື ສັ່ງຂາຍຂອງຜູ້ລົງທຶນ; ຄ້າຫຼັກຊັບໃນນາມບໍລິສັດຫຼັກຊັບ; ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ ແລະ ບໍລິຫານກອງທຶນສ່ວນບຸກຄົນ.

ບໍລິສັດໄດ້ຮັບຮອງເອົາໃບທະບຽນວິສາຫະກິດສະບັບສຸດທ້າຍ ເລກທີ 0010/ຈທວ ລົງວັນທີ 25 ມິຖຸນາ 2024 ແລະ ສະບັບປັບປຸງ ໃນວັນທີ 25 ຕຸລາ 2024 ອອກໂດຍຄະນະບໍລິຫານງານເຂດເສດຖະກິດພິເສດ. ໃນນັ້ນ, ບໍລິສັດໄດ້ປ່ຽນຊື່ຈາກບໍລິສັດຫຼັກຊັບລາວ-ຈີນ ຈຳກັດ ເປັນບໍລິສັດຫຼັກຊັບລາວ-ຈີນ ມະຫາຊົນ ແລະ ສຳນັກງານໃຫຍ່ຂອງບໍລິສັດໄດ້ມີການປ່ຽນທີ່ຢູ່ຈາກ ອາຄານຕະຫຼາດຫຼັກຊັບລາວ , ຊັ້ນ 6, ບ້ານ ໂພນທັນເໜືອ, ຖະໜົນ ກຳແພງເມືອງ, ເມືອງ ໄຊເສດຖານະຄອນຫຼວງວຽງຈັນ, ສປປ ລາວ ມາເປັນ ເຂດເສດຖະກິດ ພິເສດບຶງທາດຫຼວງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ແລະ ນະມື້ອອກບົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ / ລາອອກ*
ທ່ານ ພິລະວັນ ສຸພາບມີໄຊ	ປະທານສະພາບໍລິຫານ	ແຕ່ງຕັ້ງ ວັນທີ 03 ພຶດສະພາ 2023 ລາອອກ ວັນທີ 10 ພຶດສະພາ 2024
ທ່ານ ໝູ່ໄຊ ພຸມສຸວັນ	ປະທານສະພາບໍລິຫານ	ແຕ່ງຕັ້ງ ວັນທີ 10 ພຶດສະພາ 2024
ທ່ານ ລີ ຊາງເຫວີຍ	ຮອງປະທານສະພາບໍລິຫານ	ແຕ່ງຕັ້ງ ວັນທີ 22 ກັນຍາ 2017
ທ່ານ ໂຈ ຄຸນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງວັນທີ 05 ພຶດສະພາ 2023
ທ່ານ ຈາງ ຫົງບິນ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ສົມພິງ ບໍລິບຸດ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ລົນ ລີ	ສະມາຊິກສະພາບໍລິຫານ ທີ່ມີສ່ວນຮ່ວມໃນການບໍລິຫານ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024
ທ່ານ ປອ. ສຸທິເດດ ບຸນລືໄຊ	ສະມາຊິກສະພາບໍລິຫານ	ແຕ່ງຕັ້ງ ວັນທີ 27 ມັງກອນ 2021 ລາອອກ ວັນທີ 14 ຕຸລາ 2024
ທ່ານ ຫວາງ ເວີຍ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ຣສ. ປອ. ປິຍະ ວົງພິດ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 23 ພຶດສະພາ 2023
ທ່ານ ນະ ຈັນຕະລີວົງ	ສະມາຊິກອິດສະລະ	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ແລະ ນະມື້ອອກບົດລາຍງານມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ລົນ ລີ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 19 ກໍລະກົດ 2013
ທ່ານ ປອ ສຸດທິເດດ ບຸນລືໄຊ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 25 ກຸມພາ 2020
ທ່ານ ພິງສະຫວັດ ລືນາມ	ຮອງຜູ້ອຳນວຍການໃຫຍ່	ແຕ່ງຕັ້ງ ວັນທີ 14 ຕຸລາ 2024

ຕິວແທນດ້ານກົດໝາຍ

ຕິວແທນທາງດ້ານກົດໝາຍຂອງບໍລິສັດ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2024 ແລະ ນະມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ລີ ລົນ - ຜູ້ອຳນວຍການໃຫຍ່.

ນັກກວດສອບ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນແອນຢັ້ງ ລາວ ຈຳກັດ.

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີຂໍນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດ ນະວັນທີ ແລະ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ກັບເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນດັ່ງກ່າວ. ໃນຂັ້ນຕອນການກະກຽມບົດລາຍງານການເງິນ, ຄະນະບໍລິຫານຄອນປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກໆການປະຕິບັດທີ່ບໍ່ສອດຄ່ອງກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າ ບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງບໍລິສັດຕ້ອງຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ໄດ້ບັນທຶກໄວ້ນັ້ນ ແມ່ນມີຄວາມຖືກຕ້ອງ ສົມເຫດສົມຜົນ ຢູ່ຕະຫຼອດເວລາ, ບົດລາຍງານຖານະທາງການເງິນຂອງບໍລິສັດ ສາມາດເຊື່ອຖື ແລະ ສອດຄ່ອງກັບການບັນທຶກລະບົບບັນຊີທີ່ໄດ້ນຳໃຊ້. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສິນຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີການຄົ້ນຫາ ແລະ ປ້ອງກັນກ່ຽວກັບຄວາມບໍ່ໂປ່ງໃສ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

ການຮັບຮອງເອກະສານລາຍງານການເງິນ

ພວກຂ້າພະເຈົ້າຂໍຮັບຮອງເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ໃນນາມຂອງຄະນະອຳນວຍການ:

ລົນ ລີ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

28 ກຸມພາ 2025

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເອກະສານອ້າງອີງເລກທີ: 11486915/68446806

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ: ເຈົ້າຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ

ພວກຂ້າພະເຈົ້າໄດ້ກວດສອບເອກະສານລາຍງານການເງິນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ນະວັນທີ 31 ທັນວາ 2024, ແລະ ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນຂອງເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ທີ່ລວມມີນະໂຍບາຍການບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງບໍລິສັດແມ່ນໄດ້ຖືກກະກຽມຢ່າງຖືກຕ້ອງ, ສອດຄ່ອງກັບນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ.

ພື້ນຖານການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ (ISA). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານີ້ ໄດ້ຖືກອະທິບາຍເພີ່ມເຕີ່ມ ໃນຈັກ *ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າ* ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີຂອງ ສະພາບມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ຂໍ້ກຳນົດທາງດ້ານຈັນຍາບັນຂອງລາວ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍບໍລິສັດ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງບໍລິສັດ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2, ເອກະສານລາຍງານການເງິນແມ່ນໄດ້ຖືກກະກຽມເພື່ອຊ່ວຍຄະນະອຳນວຍການໃນການລາຍງານຕາມຂໍ້ກຳນົດຂອງເຈົ້າຂອງ. ດ້ວຍເຫດນີ້, ເອກະສານລາຍງານການເງິນອາດບໍ່ເໝາະສົມສຳລັບຈຸດປະສົງອື່ນ. ບົດລາຍງານຂອງພວກຂ້າພະເຈົ້າແມ່ນມີຈຸດປະສົງ ເພື່ອເປັນຂໍ້ມູນ ແລະ ນຳໃຊ້ສະເພາະຄະນະອຳນວຍການຂອງບໍລິສັດ ແລະ ເຈົ້າຂອງເທົ່ານັ້ນ ແລະ ບໍ່ຄວນແຈກຢາຍ ຫຼື ນຳໃຊ້ໂດຍພາກສ່ວນອື່ນ. ພວກຂ້າພະເຈົ້າແມ່ນບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງຄະນະອຳນວຍການຂອງບໍລິສັດຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມ ພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະອຳນວຍການເຫັນວ່າ ຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມ ຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະອຳນວຍການ ມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດທາງ ດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນ ທຸລະກິດ ຈົນກວ່າທີ່ທາງຄະນະອຳນວຍການບໍລິສັດຫາກເຫັນວ່າທຸລະກິດບໍ່ມີຄວາມສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ ທາງຄະນະອຳນວຍການບໍລິສັດ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າ ແມ່ນເພື່ອຮັບປະກັນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານ ຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່ເອກະສານລາຍງານການເງິນ. ການຮັບປະກັນທີ່ສົມເຫດສົມ ຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານ ການກວດສອບ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການ ຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມື ອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງ ພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການ ບິດເບືອນ ຫຼື ລະເມີດຫຼັກການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະ ສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.

A member firm of Ernst & Young Global Limited

Building a better working world

由老挝央行发行的国债	-	1,000,000,000
	2,273,336,000	**1,823,960,000**
长期投资		
由老挝财政部发行的国债	12,690,537,400	2,616,073,000
	12,690,537,400	**2,616,073,000**

截至2024年12月31日，老挝财政部发行的国债详情如下：

	本金				*利率*
	币种	*原币种金额*	*等值基普*	*期限*	*到期日*	*(% p.a)*
LA100122ABB9	USD	23,000	502,757,000	5 年	2026.11.29	7.00
LA10012226D4	USD	34,000	743,206,000	2 年	2025.06.06	5.50
LA10012229D8	USD	50,000	1,092,950,000	2 年	2025.09.12	5.50
LA1001222BD0	USD	20,000	437,180,000	2 年	2025.11.13	5.50
LA10012239E5	USD	20,000	437,180,000	3 年	2027.09.05	6.00
LA10012239E5	USD	42,000	918,078,000	3 年	2027.09.19	6.00
LA10012297E3	USD	180,000	3,934,620,000	3 年	2027.07.18	6.00
LA100112DEB8	THB	4,350,000	2,763,990,000	3 年	2027.11.21	6.00
LA10011297E4	THB	3,880,000	2,465,352,000	3 年	2027.07.18	6.00
LA10011239E6	THB	2,626,000	1,668,560,400	3 年	2027.09.05	6.00
			14,963,873,400			

13. 短期借款

	2024年12月31日	*2023年12月31日*
	基普	*基普*
北隆赞湖综合开发有限公司	26,248,421,223	26,330,955,000
	26,248,421,223	**26,330,955,000**

这是一笔有息借款，用于购买附注 11 所披露的股票，还款来源基于所购股票的销售。所购股票持有期间获得的股利及出售此股票所产生的损益将作为利息支付给贷款人。

14. 递延收入

	2024年12月31日	*2023年12月31日*
	基普	*基普*

股票出售产生的递延收入(*)	8,635,769,765	-
	8,635,769,765	**-**

(*)2024年8月2日，公司与云南恒实诚睿控股有限公司签署合同出售持有的老挝文旅集团公众公司股票。本次出售6,347,700股股票，价值8,635,769,765基普。为满足监管要求及顺利完成本次股份转让，云南恒实诚睿控股有限公司须于2025年3月31日前，提供必要的境外投资文件。

15. 应付账款

	2024年12月31日 基普	*2023年12月31日 基普*
客户结算账户-经纪	4,196,389,632	4,478,433,902
	4,196,389,632	**4,478,433,902**

16. 员工福利

	2024年12月31日 基普	*2023年12月31日 基普*
奖金和福利基金(*)	342,357,183	342,357,183
应付工资	26,408,427	33,125,852
	368,765,610	**375,483,035**

(*)奖金和福利基金根据2019年5月16日召开的2018年年度股东大会决议设立。该储备金的提取和使用应根据董事会的决议并经股东大会批准。

17. 实收资本

	2024年12月31日		*2023年12月31日*	
股东	*持股比例*	*基普*	*持股比例*	*基普*
农业促进银行	41%	41,000,000,000	41%	41,000,000,000
老挝信息产业有限公司	20%	20,000,000,000	20%	20,000,000,000
太平洋证券股份有限公司	39%	39,000,000,000	39%	39,000,000,000
	100%	**100,000,000,000**	**100%**	**100,000,000,000**

18. 佣金及手续费收入净额

	2024 年 *基普*	*2023 年* *基普*
收入		
证券经纪业务	11,145,524	50,408,538
财务顾问	3,688,433,540	2,195,674,463
代理销售	7,965,277,121	6,524,120,554
	11,664,856,185	**8,770,203,555**
支出		
财务顾问	(39,722,250)	(21,781,000)
证券承销	(260,337,600)	(71,594,400)
代理销售	(849,942,586)	(479,129,912)
其它证券佣金支出	(4,237,921)	
	(1,154,240,357)	**(572,505,312)**
佣金及手续费收入净额	**10,510,615,828**	**8,197,698,243**

19. 其他营业支出

	2024年 *基普*	*2023年* *基普*
租金	1,121,070,924	2,595,768,049
外部服务	238,157,475	302,751,077
业务招待费	123,911,000	89,479,750
差旅费	319,470,056	166,137,264
水电费	88,595,005	75,286,474
保险费	169,826,385	115,656,925
邮电费	37,740,629	32,491,040
会议及研讨会费用	349,846,112	263,776,360
税费	9,443,000	7,146,352
汇兑损益	680,173,736	111,655,349
其他	511,013,661	277,781,845
	3,649,247,983	**4,037,930,485**

20. 所得税

根据老挝人民民主共和国税法，公司应对当年利润计提所得税。根据于2019年6月18日颁布的第67/NA号新所得税法（自2020年1月1日起生效），公司所得税为税前利润总额的20%。

由于公司已搬迁至塔銮湖经济特区，公司享受自2024年6月25日取得的新营业许可证起两年企业所得税豁免。

2024年所得税计提详情如下：

	2024年 *基普*	*2023年* *基普*
本年税前利润	**11,320,798,228**	**1,528,580,982**
减:		
非征税收入	*(7,304,991,771)*	(2,520,625,619)
免征所得税收入	*(3,393,824,059)*	(2,596,293,549)
加:		
不可扣减支出	*2,736,329,907*	3,893,209,195
应税净收入	**3,358,312,305**	**304,871,009**
弥补亏损金额	(3,358,312,305)	(304,871,009)
未利用亏损结转	**(1,271,090,653)**	**(4,629,402,958)**
所得税费用（20%的法定税率）	**-**	-
总计本年应纳所得税额	**-**	-
年初应交所得税	-	-
本年已付所得税	-	-
年末应纳所得税额	**-**	**-**

公司的应纳税额需经税务机关审核。由于对税收法规在许多类型交易的适用可能会产生不同的解释，因此财务报表中列示的所得税额可能会在日后经税务机关最终认定后变化。

亏损结转

根据于 2019 年 6 月 18 日颁布的第 67/NA 号所得税法（自 2020 年 1 月 1 日起生效），公司可以将当年亏损在以后五年内抵扣产生的应纳税所得额。该期限届满后，未抵扣完的亏损不能结转从盈利中扣除。截至 2024 年 12 月 31 日亏损结转的详情如下：

产生年度	亏损结转期间可至	*可结转亏损* *基普*	*已弥补亏损金额* *基普*	*期末可结转亏损* *基普*
2020	2025	(4,991,141,258)		(4,991,141,258)
2021	2026	(4,582,326,343)		(9,573,467,601)
2022	2027		4,639,193,634	(4,934,273,967)
2023	2028		304,871,009	(4,629,402,958)
2024	2029		3,358,312,305	(1,271,090,653)
		(9,573,467,601)	**8,302,376,948**	**(1,271,090,653)**

21. 关联交易

与关联方的交易详情如下：

关联方	*关系*	*交易类型*	*2024年*	*2023年*
农业促进银行	股东	结算账户	7,525,992	2,339,233
	股东	储蓄账户	393,791,338	169,415,240
			401,317,330	**171,754,473**

22. 资产负债表日后事项

自2024年12月31日后，到本报告出具日，公司未发生需要在财务报表中调整或披露的重大事项或情况。

编制人：　　批准人：

Boubphathip Vongdoaungchanh女士
财务经理

李林先生
总经理

老挝，万象

2025年2月28日

ພິຈາລະນາ ແລະ ຮັບຮອງ ການປັບປຸງບາງເນື້ອໃນຂອງກົດລະບຽບ ບໍລິສັດຫຼັກຊັບລາວ-ຈີນ ມະຫາຊົນ

审议变更老-中证券公司章程部分内容

- ອີງຕາມ ໜັງສືແຈ້ງຕອບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຂອງ ບລຈ ສະບັບເລກທີ 73/ສຄຄຊ, ລົງວັນທີ 8 ເມສາ 2025 ທີ່ອອກໃຫ້ໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
- 根据证券管理委员会办公厅 2025 年 4 月 8 日下发的《关于确认老-中证券公众公司公开发行股票结果的批复》（[证管委办公厅]第 73 号）；
- ອີງຕາມ ໃບທະບຽນວິສາຫະກິດ ສະບັບເລກທີ 0010/ຈທວ, ລົງວັນທີ 22 ເມສາ 2025 ທີ່ອອກໃຫ້ໂດຍ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ.
- 根据万象市特区管理委员会 2025 年 4 月 22 日颁发的《营业执照》（[企注官]第 0010 号）》。

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອີ້ນວ່າ: “ບລຈ”) ໄດ້ສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຄັ້ງທຳອິດ (IPO) ໃນວັນທີ 3 ເມສາ 2025, ເຊິ່ງຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນແມ່ນໄດ້ຮັບການຢັ້ງຢືນຈາກ ສຄຄຊ ແລ້ວ, ພ້ອມທັງໄດ້ຮັບໃບທະບຽນວິສາຫະກິດສະບັບໃໝ່ທີ່ອອກໂດຍ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ນະຄອນຫຼວງວຽງຈັນ. ດັ່ງນັ້ນ, ບລຈ ຈຳເປັນຕ້ອງໄດ້ປັບປຸງເນື້ອໃນທີ່ກ່ຽວຂ້ອງຂອງກົດລະບຽບ ບລຈ ໃຫ້ສອດຄ່ອງກັນ ດັ່ງຕໍ່ໄປນີ້:

老-中证券公众公司（简称“老-中证券”）于 2025 年 4 月 3 日完成了首次公开募股（IPO），公开发行股票结果经证管委办公厅确认，并获得万象市特区管理委员会颁发的新的营业执照。据此，老-中证券应变更公司章程的相关内容如下：

I. ເນື້ອໃນກົດລະບຽບ ບລຈ ທີ່ຕ້ອງໄດ້ປັບປຸງ

一、公司章程应变更内容

1. ທຶນຈົດທະບຽນ: ເພີ່ມຂຶ້ນຈາກ 100,000,000,000 ກີບ ມາເປັນ 111,111,120,000 ກີບ;
2. ຈຳນວນຮຸ້ນທັງໝົດ: ຈຳນວນທີ່ອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນທົ່ວໄປ 111,111,200 ຮຸ້ນ, ເຊິ່ງຈຳນວນຮຸ້ນທັງໝົດເພີ່ມຂຶ້ນຈາກ 1,000,000,000 ຮຸ້ນ ມາເປັນ 1,111,111,200 ຮຸ້ນ;
3. ໂຄງປະກອບຂອງຜູ້ຖືຮຸ້ນ:

   ໂຄງປະກອບຂອງຜູ້ຖືຮຸ້ນເດີມ:

   1) ທະນາຄານສົ່ງເສີມກະສິກຳ ຈຳກັດ, ຖືຮຸ້ນ 4,100,000 ຮຸ້ນ, ອັດຕາສ່ວນ 41%;
   2) ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈຳກັດ, ຖືຮຸ້ນ 3,900,000 ຮຸ້ນ, ອັດຕາສ່ວນ 39%;
   3) ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ຖືຮຸ້ນ 2,000,000 ຮຸ້ນ, ອັດຕາສ່ວນ 20%.

ໂຄງປະກອບຂອງຜູ້ຖືຮຸ້ນໃໝ່:

1) ທະນາຄານສົ່ງເສີມກະສິກຳ ຈຳກັດ, ຖືຮຸ້ນ 410,000,000 ຮຸ້ນ, ອັດຕາສ່ວນ 36.90%;
2) ບໍລິສັດຫຼັກຊັບ ປາຊີຟິກຮຸ້ນສ່ວນ ຈຳກັດ, ຖືຮຸ້ນ 390,000,000 ຮຸ້ນ, ອັດຕາສ່ວນ 35.10%;
3) ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ, ຖືຮຸ້ນ 200,000,000 ຮຸ້ນ, ອັດຕາສ່ວນ 18.00%;
4) ຜູ້ລົງທຶນທົ່ວໄປ, ຖືຮຸ້ນ 111,111,200 ຮຸ້ນ, ອັດຕາສ່ວນ 10.00%.

1、注册资本：由 100,000,000,000 基普增加至 111,111,120,000 基普

2、总股本：公开发行股数 111,111,200 股，总股本由 1,000,000,000 股增加至 1,111,111,200 股

3、股东结构：

原股东结构：

1）农业促进银行，持股 4,100,000 股，持股比例 41%。

2）太平洋证券股份有限公司，持股 3,900,000 股，持股比例 39%。

3）老挝信息产业有限公司，持股 2,000,000 股，持股比例 20%。

新股东结构：

1）农业促进银行，持股 410,000,000 股，持股比例 36.90%。

2）太平洋证券股份有限公司，持股 390,000,000 股，持股比例 35.10%。

3）老挝信息产业有限公司，持股 200,000,000 股，持股比例 18.00%。

4）公众投资者，持股 111,111,200 股，持股比例 10.00%。

II. ມາດຕາສະເພາະໃນກິດລະບຽບ ບລຈ ທີ່ຕ້ອງໄດ້ປັບປຸງໃຫ້ຖືກຕ້ອງ

二、公司章程应变更具体条款

ມາດຕາ 8 ທຶນຈົດທະບຽນ (ເກົ່າ)

第八条 注册资本（旧）

ບລຈ ມີທຶນຈົດທະບຽນ ມູນຄ່າທັງໝົດ 100,000,000,000 ກີບ (ໜຶ່ງຮ້ອຍຕື້ກີບ). ທຶນຈົດທະບຽນ ໄດ້ຈາກການປະກອບທຶນຂອງຜູ້ຖືຮຸ້ນທີ່ໄດ້ຖອກຄືບຖ້ວນແລ້ວ. ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

公司注册资本共计 100,000,000,000 基普（壹仟亿基普）。全部注册资本金由各股东出资并已完成全部注资，具体如下：

- ທຶນເປັນເງິນສົດ : 100,000,000,000 ກີບ (ໜຶ່ງຮ້ອຍຕື້ກີບ);
  现金资本 : 100,000,000,000 基普；
- ທຶນເປັນວັດຖຸ : ບໍ່ມີ.
  实物资本 : 无。

ມາດຕາ 8 ທຶນຈົດທະບຽນ (ໃໝ່)

第八条 注册资本（新）

ບລຈ ມີທຶນຈົດທະບຽນ ມູນຄ່າທັງໝົດ 111,111,120,000 ກີບ (ໜຶ່ງຮ້ອຍສິບເອັດຕື້ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນຊາວພັນກີບ). ທຶນຈົດທະບຽນ ໄດ້ຈາກການປະກອບທຶນຂອງຜູ້ຖືຮຸ້ນທີ່ໄດ້ຖອກຄືບຖ້ວນແລ້ວ. ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

公司注册资本共计 111,111,120,000 基普（壹仟壹佰壹拾壹亿壹仟壹佰壹拾贰万基普）。全部注册资本金由各股东出资并已完成全部注资，具体如下：

- ທຶນເປັນເງິນສົດ: 111,111,120,000 ກີບ (ໜຶ່ງຮ້ອຍສິບເອັດຕື້ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນຊາວພັນກີບ);
  现金资本 ：111,111,120,000 基普（壹仟壹佰壹拾壹亿壹仟壹佰壹拾贰万基普）；
- ທຶນເປັນອັດຖຸ : ບໍ່ມີ.
  实物资本 ：无。

ມາດຕາ 10 ຮຸ້ນ (ເກົ່າ)

第十条 公司股份（旧）

ບລຈ ມີລາຍລະອຽດຂອງຮຸ້ນທັງໝົດ ດັ່ງລຸ່ມນີ້:

公司全部股份如下：

- ຈຳນວນຮຸ້ນທັງໝົດ : 1,000,000,000 ຮຸ້ນ (ໜຶ່ງຕື້ຮຸ້ນ);
  总股本 ：1,000,000,000 股（拾亿股）；
- ມູນຄ່າກຳນົດ : 100 ກີບ/ຮຸ້ນ (ໜຶ່ງຮ້ອຍກີບ/ຮຸ້ນ);
  每股面值 ：100 基普/股（壹佰基普）；
- ຮຸ້ນສາມັນ : 1,000,000,000 ຮຸ້ນ (ໜຶ່ງຕື້ຮຸ້ນ);
  普通股 ：1,000,000,000 股（拾亿股）；
- ຮຸ້ນບຸລິມະສິດ : ບໍ່ມີ.
  优先股 ：无。

ມາດຕາ 10 ຮຸ້ນ (ໃໝ່)

第十条 公司股份（新）

ບລຈ ມີລາຍລະອຽດຂອງຮຸ້ນທັງໝົດ ດັ່ງລຸ່ມນີ້:

公司全部股份如下：

- ຈຳນວນຮຸ້ນທັງໝົດ : 1,111,111,200 ຮຸ້ນ (ໜຶ່ງຕື້ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນສິບເອັດພັນສອງຮ້ອຍຮຸ້ນ);
  总股本 ：1,111,111,200 股（拾壹亿壹仟壹佰壹拾壹万壹仟贰佰股）；
- ມູນຄ່າກຳນົດ : 100 ກີບ/ຮຸ້ນ (ໜຶ່ງຮ້ອຍກີບ/ຮຸ້ນ);
  每股面值 ：100 基普/股（壹佰基普）；
- ຮຸ້ນສາມັນ : 1,111,111,200 ຮຸ້ນ (ໜຶ່ງຕື້ໜຶ່ງຮ້ອຍສິບເອັດລ້ານໜຶ່ງແສນສິບເອັດພັນສອງຮ້ອຍຮຸ້ນ);
  普通股 ：1,111,111,200 股（拾壹亿壹仟壹佰壹拾壹万壹仟贰佰股）；
- ຮຸ້ນບຸລິມະສິດ : ບໍ່ມີ.
  优先股 ：无。

ມາດຕາ 13 ໂຄງປະກອບຂອງຜູ້ຖືຮຸ້ນ (ເກົ່າ)

第十三条 股东结构（旧）

ຜູ້ຖືຮຸ້ນຂອງ ບລຈ ທັງໝົດມີ 3 ທ່ານ ດັ່ງຕໍ່ໄປນີ້:

ລ/ດ	ລາຍຊື່ ແລະ ນາມສະກຸນ	ຈຳນວນຮຸ້ນ	ອັດຕາສ່ວນ (%)
1	ທະນາຄານສົ່ງເສີມກະສິກຳ ຈຳກັດ	410,000,000	41
2	ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ	390,000,000	39
3	ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ	200,000,000	20

公司共有 3 名股东：

序号	名称/姓名	股份数量（股）	持股比例（%）
1	农业促进银行	410,000,000	41
2	太平洋证券股份有限公司	390,000,000	39
3	老挝信息产业有限公司	200,000,000	20

ມາດຕາ 13 ໂຄງປະກອບຂອງຜູ້ຖືຮຸ້ນ (ໃໝ່)

第十三条 股东结构（新）

ໂຄງປະກອບ ຜູ້ຖືຮຸ້ນຂອງ ບລຈ ມີດັ່ງນີ້:

ລ/ດ	ລາຍຊື່ ແລະ ນາມສະກຸນ	ຈຳນວນຮຸ້ນ	ອັດຕາສ່ວນ (%)
1	ທະນາຄານສົ່ງເສີມກະສິກຳ ຈຳກັດ	410,000,000	36.90
2	ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ	390,000,000	35.10
3	ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ	200,000,000	18.00
4	ຜູ້ລົງທຶນທົ່ວໄປ	111,111,200	10.00

公司股东结构如下：

序号	名称/姓名	股份数量（股）	持股比例（%）
1	农业促进银行	410,000,000	36.90
2	太平洋证券股份有限公司	390,000,000	35.10
3	老挝信息产业有限公司	200,000,000	18.00
4	公众投资者	111,111,200	10.00

ດັ່ງນັ້ນ, ຈຶ່ງຂໍຮຽນສະເໜີມາຍັງກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ໃຫ້ດຳເນີນການປັບປຸງ ມາດຕາ 8 ທຶນຈົດທະບຽນ, ມາດຕາ 10 ຮຸ້ນ ແລະ ມາດຕາ 13 ໂຄງປະກອບຂອງຜູ້ຖືຮຸ້ນ ຂອງ ກົດລະບຽບ ບລຈ ອີງຕາມ ແຜນການທີ່ກ່າວມາຂ້າງເທິງ, ພ້ອມທັງມອບສິດໃຫ້ຄະນະອຳນວຍການຍື່ນໜັງສືສະເໜີຕໍ່ ຄະນະຄຸ້ມຄອງເຂດ ເສດຖະກິດພິເສດ ນະຄອນຫຼວງວຽງຈັນ ເພື່ອປັບປຸງມາດຕາທີ່ກ່າວມາຂ້າງເທິງຂອງ ກົດລະບຽບ ບລຈ.

特提请股东大会审议按照上述方案对老-中证券《公司章程》“第八条 注册资本”、“第十条 公司股份”和“第十三条 股东结构”进行变更，授权管理层向万象市特区管理委员会申请变更《公司章程》上述条款。

ເອກະສານຄັດຕິດ 1: ໜັງສືແຈ້ງຕອບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຂອງ ບລຈ;

ເອກະສານຄັດຕິດ 2: ໃບທະບຽນວິສາຫະກິດ (ສະບັບໃໝ່).

附件 1：《关于确认老-中证券公众公司公开发行股票结果的批复》

附件 2：《营业执照（新）》

ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປະຈຳປີ 2024 ຂອງ ບລຈ

审议老-中证券 2024 年度分红方案

ໃນປີ 2024, ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ຊື່ຫຍໍ້: “ບລຈ”) ໄດ້ບັນລຸຜົນກຳໄລສຸດທິ 11,320,798,228 ກີບ ແລະ ພາຍຫຼັງຈາກຫັກເຂົ້າຄັງສຳຮອງຕາມລະບຽບການ 10% ແລ້ວ ສາມາດແບ່ງປັນຜົນໄດ້ 10,188,718,405 ກີບ. ອີງຕາມ ກົດລະບຽບ ບລຈ ສະບັບລົງວັນທີ 14 ຕຸລາ 2024 ທີ່ກຳນົດໄວ້ໃນ ມາດຕາ 61 ການແບ່ງປັນເງິນປັນຜົນ ແລະ ການໂອນກຳໄລ ຂໍ້ 1. ບລຈ ຈະບໍ່ຈ່າຍເງິນປັນຜົນ ໃນເມື່ອ ບລຈ ຍັງຂາດທຶນຢູ່, ກ່ອນການແບ່ງປັນຜົນກຳໄລຕ້ອງລຶບລ້າງຂາດທຶນສະສົມກ່ອນ (ຖ້າມີ) ໂດຍອີງຕາມຂໍ້ກຳນົດໃນກົດ ໝາຍວ່າດ້ວຍ ວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022 ແລະ ຂໍ້ 2. ບົນພື້ນຖານປະຕິບັດ ຕາມ ຂໍ້ 1 ຂອງມາດຕານີ້, ການແບ່ງເງິນປັນຜົນ ບລຈ ບໍ່ຫຼຸດ 50% (ຫ້າສິບສ່ວນຮ້ອຍ) ຂອງກຳໄລສຸດທິຫຼັງຈາກ ຫັກອາກອນໃນແຕ່ລະປີ.

2024 年度，老-中证券公众公司（简称“老-中证券”）实现净利润 11,320,798,228 基普（约合 382.85 万元），计提 10%法定公积金后可分配利润 10,188,718,405 基普（约合 344.56 万元）。根据老-中证券 2024 年 10 月 14 日订立的《老-中证券公众公司章程》“第六十一条 收益分配和利润支付 1.根据 2022 年 12 月 29 日颁布的《企业法（修正案）》（[国会]第 33 号）当公司存在累计亏损，将不进行利润分配，利润分配前须先弥补累计亏损（如有）；2.在本条第 1 款基础上，公司将每年税后净利润不低于 50%用于分红。”

ມາຮອດວັນທີ 31 ທັນວາ 2024, ບລຈ ບໍ່ມີການຂາດທຶນສະສົມ, ມີກຳໄລສາມາດແບ່ງປັນຜົນໄດ້ 10,188,718,405 ກີບ. ໃນວັນທີ 3 ເມສາ 2025, ພາຍຫຼັງທີ່ ບລຈ ໄດ້ສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ແລ້ວ, ຈຳນວນຮຸ້ນທັງໝົດຂອງ ບລຈ ແມ່ນ 1,111,111,200 ຮຸ້ນ. ຈຶ່ງຂໍສະເໜີແບ່ງປັນຜົນ ກຳໄລປະມານ 54.53% ຂອງກຳໄລທີ່ສາມາດຈ່າຍເງິນປັນຜົນໄດ້, ໂດຍມີລາຍລະອຽດດັ່ງນີ້:

ແຜນຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ

ຈຳນວນເງິນປັນຜົນທັງໝົດ: 5,555,556,000 ກີບ

ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ໄດ້ຮັບເງິນຜົນ: ວັນທີ 8 ສິງຫາ 2025

ມື້ຈ່າຍເງິນປັນຜົນ: 12 ກັນຍາ 2025

截至 2024 年 12 月 31 日，老-中证券无累计亏损，可分配净利润 10,188,718,405 基普（约合 344.56 万元）。2025 年 4 月 3 日，老-中证券完成首次公开募股（IPO）后，老-中证券总股本 1,111,111,200 股。建议将可分配利润约 54.53%用于分红，具体如下：

分红方案：5 基普/股（约合 0.002 元/股）

分红金额：5,555,556,000 基普（约合 187.88 万元）

股权登记日（确定股东参会和分红资格）：2025 年 8 月 8 日

分红派息日：2025 年 9 月 12 日

ຕາຕະລາງລາຍລະອຽດການແບ່ງປັນຜົນກຳໄລ

ລ/ດ	ລາຍການ	ຈຳນວນ (ກີບ)
1	ກຳໄລສຸດທິ ປີ 2024	11,320,798,228
2	ຄ້ຳສຳຮອງຕາມລະບຽບການ 10%	1,132,079,823
3	ສາມາດແບ່ງປັນຜົນໄດ້	10,188,718,405
4	ຈຳນວນເງິນປັນຜົນ	5,555,556,000
5	ຍອດຄ້ຳເຫຼືອ	4,633,162,405

利润分配表

序号	项目	金额（基普）	合人民币（元）
1	2024 年净利润	11,320,798,228	3,828,474.21
2	计提 10%法定公积金	1,132,079,823	382,847.42
3	可分配利润	10,188,718,405	3,445,626.79
4	分红金额	5,555,556,000	1,878,781.20
5	余额	4,633,162,405	1,566,845.59

ສິ້ນປີ 2024, ພາຍຫຼັງຈັດສັນການຈ່າຍເງິນປັນຜົນ ຈຳນວນ 5,555,556,000 ກີບ ແລ້ວ, ຍັງມີຍອດຄ້ຳເຫຼືອທີ່ສາມາດແບ່ງປັນຜົນກຳໄລ ຈຳນວນ 4,633,162,405 ກີບ. ຈຳນວນເງິນປັນຜົນ ຂອງຜູ້ຖືຮຸ້ນທຸກຝ່າຍ ຄືດັ່ງນີ້:

2024 财年，支付分红 5,555,556,000 基普（约合 187.88 万元）后，剩余可分配利润 4,633,162,405 基普（约合 156.68 万元）。各股东方分红金额如下表：

ຕາຕະລາງການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ

ລ/ດ	ຜູ້ຖືຮຸ້ນ	ອັດຕາສ່ວນ (%)	ຈຳນວນຮຸ້ນ (ຮຸ້ນ)	ຈຳນວນເງິນປັນຜົນ (ກີບ)
1	ທະນາຄານສົ່ງເສີມກະສິກຳ ຈຳກັດ	36.90	410,000,000	2,050,000,000
2	ບໍລິສັດຫຼັກຊັບ ປາຊີຟິກ ຮຸ້ນສ່ວນ ຈຳກັດ	35.10	390,000,000	1,950,000,000
3	ບໍລິສັດ ລາວ ອຸດສາຫະກຳຂໍ້ມູນຂ່າວສານ ຈຳກັດ	18.00	200,000,000	1,000,000,000
4	ຜູ້ລົງທຶນທົ່ວໄປ	10.00	111,111,200	555,556,000
ລວມ		**100.00**	**1,111,111,200**	**5,555,556,000**

股东分红统计表

序号	股东方	持股比例（%）	股份数量（股）	分红金额（基普）	合人民币（元）
1	农业促进银行	36.90	410,000,000	2,050,000,000	693,270.21
2	太平洋证券股份有限公司	35.10	390,000,000	1,950,000,000	659,452.15
3	老挝信息产业有限公司	18.00	200,000,000	1,000,000,000	338,180.59
4	公众投资者	10.00	111,111,200	555,556,000	187,878.25
共计		**100.00**	**1,111,111,200**	**5,555,556,000**	**1,878,781.20**

*ໝາຍເຫດ: ພາຍຫຼັງທີ່ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວແລ້ວ ຈະໄດ້ຮັບນະໂຍບາຍການຍົກເວັ້ນອາກອນເງິນປັນຜົນ 10%.

*注：老-中证券公众公司在老交所上市后，可享分红税 10%全免政策。

ດັ່ງນັ້ນ, ຈຶ່ງຂໍຮຽນສະເໜີມາຍັງກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ:

1. ແຜນຈ່າຍເງິນປັນຜົນຂອງ ບລຈ ປະຈຳປີ 2024 ແມ່ນຈ່າຍເງິນປັນຜົນດ້ວຍຮູບແບບເງິນສົດ 5 ກີບ/ຮຸ້ນ, ຈຳນວນເງິນປັນຜົນທັງໝົດ: 5,555,556,000 ກີບ.
2. ການຈັດແຈງມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອຮັບເງິນປັນຜົນ ແລະ ມື້ຈ່າຍເງິນປັນຜົນທີ່ກ່ຽວຂ້ອງ ແມ່ນ ມອບສິດໃຫ້ຄະນະອຳນວຍການຈັດຕັ້ງປະຕິບັດອີງຕາມການໃຫ້ຄຳຊີ້ນຳ ແລະ ແຈ້ງຕອບຂອງຕະຫຼາດຫຼັກຊັບລາວ.

特提请股东大会审议：

1、老-中证券 2024 年度分红方案为以现金方式分红 5 基普/股（约合 0.002 元/股），分红金额：5,555,556,000 基普（约合 187.88 万元）；

2、有关除权除息日、分红派息日的安排，授权管理层根据老交所批复执行。

ໝາຍເຫດ: ອັດຕາແລກປ່ຽນອີງຕາມກະດານອັດຕາແລກປ່ຽນເງິນຕາຕ່າງປະເທດຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ເມສາ 2025, 1 ຢວນ = 2,957 ກີບ.

*注：汇率根据老挝外贸银行 2025 年 4 月 30 日外汇牌价 1 元=2,957 基普。

ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານ ຂອງ ບລຈ
审议老-中证券员工奖励方案

ເພື່ອຮັກສາສິດຜົນປະໂຫຍດຂອງຜູ້ຖືຮຸ້ນ ແລະ ຮັບປະກັນໃຫ້ ບລຈ ບັນລຸເປົ້າໝາຍການຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໃນ 4 ປີຜ່ານມາ ພະນັກງານໄດ້ເສຍສະຫຼະຕໍ່ຄອບຄົວຕົນເອງເພື່ອສ່ວນລວມກໍຄື ບລຈ ແລະ ເສຍສະຫຼະສິດຜົນປະໂຫຍດສ່ວນຕົວຫຼາຍເພື່ອຜົນງານຂອງ ບລຈ ໃຫ້ໄດ້ບັນລຸການຈົດທະບຽນໃນຕະຫຼາດຫຼັກຊັບລາວ. ເພື່ອເປັນການຍ້ອງຍໍສັນລະເສີນ ແລະ ຂອບໃຈຕໍ່ການເສຍສະຫຼະຂອງພະນັກງານທຸກຄົນ, ເພື່ອເປັນດຶງດູດ ແລະ ຮັກສາບຸກຄະລາກອນທີ່ມີຄວາມສາມາດ, ຈຶ່ງຂໍສະເໜີມາຍັງບໍລິສັດດຳເນີນການໃຫ້ລາງວັນແກ່ພະນັກງານທັງໝົດຂອງ ບລຈ, ຊຶ່ງມີແຜນການລາຍລະອຽດດັ່ງນີ້:

为了维护股东利益，确保公司完成上市目标，4 年来广大员工舍小家为大家，为公司业绩达到上市要求牺牲了很多个人利益。为表彰和感谢全体员工的贡献，吸引和留住人才，拟建议公司对老-中证券全体员工进行奖励，具体方案如下：

ພິຈາລະນາເຖິງຄວາມບໍ່ແນ່ນອນ ທີ່ກະຊວງການເງິນຈະອະນຸມັດຍົກເວັ້ນອາກອນກຳໄລຂອງບໍລິສັດ 20% ຕາມນະໂຍບາຍ ຂອງເຂດເສດຖະກິດພິເສດ ສຳລັບປີ 2024 ໃນການປະຕິບັດຕົວຈິງເມື່ອກວດກາການມອບອາກອນ ຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ເອີ້ນຫຍໍ້ວ່າ: “ບລຈ”), ວາລະນີ້ໄດ້ອອກແຜນໃຫ້ໂບນັດພະນັກງານ ຕາມກຳລິມິທີ່ຈະຕ້ອງເສຍອາກອນກຳໄລຂອງບໍລິສັດ 20%. ໃນປີ 2024, ບລຈ ໄດ້ບັນລຸຜົນກຳໄລກ່ອນມອບອາກອນ 11,320,798,228 ກີບ. ກໍລະນີຖ້າຕ້ອງເສຍອາກອນກຳໄລ 20% ຂອງບໍລິສັດ, ຈະມີກຳໄລສຸດທິ 9,056,638,582 ກີບ, ພາຍຫຼັງຈາກຫັກເຂົ້າຄັງສຳຮອງຕາມລະບຽບການ 10% ແລ້ວ ສາມາດແບ່ງປັນຜົນກຳໄລໄດ້ 8,150,974,724 ກີບ.

考虑到财政部核定老-中证券公众公司（简称“老-中证券”）2024 年度税收时，同意执行经济特区 20%企业所得税全免政策的不确定性，本议案员工奖励方案按照认缴 20%企业所得税进行设计。2024 年度，老-中证券实现税前利润 11,320,798,228 基普（约合 382,85 万元），如需扣除 20%企业所得税的情形，税后净利润 9,056,638,582 基普（约合 306.28 万元），计提 10%法定公积金后可分配利润 8,150,974,724 基普（约合 275.65 万元）。

ພາຍຫຼັງຫັກເງິນປັນຜົນ 5,555,556,000 ກີບ ແລ້ວ ກໍສາມາດຈັດສັນຜົນກຳໄລສຸດທິຈຳນວນ 2,595,418,724 ກີບ ໄດ້. ໃນປີ 2023, ໄດ້ບັນລຸຜົນກຳໄລສຸດທິ 1,528,580,982 ກີບ, ລົບລ້າງການຂາດທຶນສະສົມແລ້ວຍັງເຫຼືອ 18,060,214 ກີບ, ສະນັ້ນ 2024 ບໍ່ມີການຂາດທຶນສະສົມຕ້ອງການລົບລ້າງ.

扣除分红 5,555,556,000 基普（约合 187.88 万元）后可支配利润 2,595,418,724 基普（约合 87.77 万元）。2023 年度，老-中证券实现净利润 1,528,580,982 基普（约合 51.69 万元），弥补累计亏损后未分配利润 18,060,214 基普（约合 6,108 元），2024 年度无累计亏损需要弥补。

ອີງຕາມ ມະຕິຕົກລົງກອງປະຊຸມສາມັນຜູ້ຖືຮຸ້ນ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ປະຈຳປີ 2018, ວາລະ 3 ໄດ້ ເຫັນດີ ແລະ ຮັບຮອງເອົາ ການປັບປຸງຄັງສຳຮອງຕ່າງໆຂອງ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ບົນພື້ນຖານຄັງສຳຮອງຕາມລະບຽບການ 10% ທີ່ມີຢູ່ແລ້ວ ເຊັ່ນ: ເຫັນດີໃຫ້ສ້າງຄັງສຳຮອງເພື່ອຂະຫຍາຍທຸລະກິດ 30% ແລະ ຄັງສຳຮອງສະຫວັດດີການພະນັກງານ 10% ຕາມມະຕິສະພາບໍລິຫານ (ເອກະສານຄັດຕິດມາພ້ອມ).

参照 2019 年 5 月 16 日签署的《老-中证券有限公司 2018 年度股东大会决议》“审议通过储备金调整方案，根据董事会决议，在原有 10%法定公积金的基础上，增加 30%业务拓展储备金和 10%员工福利金。”（详见附件）

ໃນການປະຕິບັດຕົວຈິງ ຄັງສະວັດດີການພະນັກງານປະຈຳປີ 2018 ໄດ້ຖືກຫັກໄວ້ແລ້ວ, ແຕ່ບໍ່ໄດ້ມີການແບ່ງປັນ. ເນື່ອງຈາກຜົນກະທົບຂອງໂຄວິດ-19 ໃນໄລຍະຜ່ານມາ ປີ 2020-2021 ບລຈ ໄດ້ປະສົບການຂາດທຶນ. ເພື່ອຮັບປະກັນໃຫ້ ບລຈ ສາມາດສອດຄ່ອງກັບເງື່ອນໄຂການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ, ດັ່ງນັ້ນໃນປີ 2019 ແລະ 2022-2023 ບລຈ ບໍ່ໄດ້ສະເໜີນຳ ກອງປະຊຸມຜູ້ຖືຮຸ້ນຫັກຄັງສະຫວັດດີການພະນັກງານ, ສະພາບລະອຽດຄື ຕາຕະລາງຂ້າງລຸ່ມນີ້:

在实际执行过程中，2018 年度的员工福利金计提后没有进行分配。由于疫情，2020-2021 年度老-中证券亏损，为了保证公司符合上市条件，2019 及 2022-2024 年度老-中证券没有向股东大会申请计提员工福利金，具体情况如下表：

ປີ	ກຳໄລສຸດທິ	ຄັງສະຫວັດດີການພະນັກງານ 10% (ກີບ)	ໝາຍເຫດ
2018	ກຳໄລສຸດທິ: 5,848,297,029 ກຳໄລສະສົມ: 3,423,571,828	342,357,183	ໄດ້ຫັກໄວ້ ບໍ່ໄດ້ແບ່ງປັນ
ຖ້າອີງໃສ່ມະຕິກອງປະຊຸມຜູ້ຖືຮຸ້ນປີ 2018, ນຳສະເໜີໃຫ້ຜູ້ຖືຮຸ້ນພິຈາລະນາການຫັກຄັງສະຫວັດດີການພະນັກງານ 10%			
2019	6,330,635,121	633,063,512	ບໍ່ໄດ້ສະເໜີຫັກ
2020	（12,223,599,759）		
2021	（1,484,381,597）		
2022	5,643,996,022		ຂາດທຶນສະສົມ, ບໍ່ໄດ້ຫັກ
2023	1,528,580,982		ລົບລ້າງຂາດທຶນສະສົມ, ບໍ່ໄດ້ຫັກ
2024	9,056,638,582	905,663,858	ບໍ່ໄດ້ຫັກ
ລວມ		1,881,084,553	

年度	净利润	10%员工福利金（基普）	合人民币（元）	备注
2018	年度净利润：5,848,297,029 累计未分配净利润：3,423,571,828	342,357,183	115,779	已计提 未分配
如果参照 2018 年股东会决议，提交股东会审议计提 10%员工福利金				
2019	6,330,635,121	633,063,512	214,090	未申请计提
2020	（12,223,599,759）			
2021	（1,484,381,597）			
2022	5,643,996,022			累计亏损，未计提
2023	1,528,580,982			弥补累计亏损，未计提
2024	9,056,638,582	905,663,858	306,278	未计提
共计		1,881,084,553	636,147	

ເພື່ອເປັນການຍ້ອງຍໍພະນັກງານທຸກທ່ານ ໄດ້ທຸ່ມເທເຫື່ອແຮງ ແລະ ສະຕິປັນຍາ ທັງໄດ້ເສຍສະຫຼະຜົນປະໂຫຍດສ່ວນຕົວ ໃນໄລຍະ 2018-2024 ເພື່ອ ບລຈ ສາມາດ ຈົດທະບຽນຢູ່ ຕລຊລໄດ້, ຈຶ່ງຂໍສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາເອົາ 1,880,000,000 ກີບ ຂອງສະຫວັດດີການພະນັກງານ ທີ່ບໍ່ໄດ້ແບ່ງປັນ ຫຼື ບໍ່ໄດ້ສະເໜີຫັກອອກ, ຫັກຈາກກຳໄລສຸດທິ ຂອງ ປີ 2024 ແລະ ຈ່າຍເປັນເງິນສົດ ເພື່ອເປັນການໃຫ້ໂບນັດແກ່ພະນັກງານ ບລຈ. ແຜນການໃຫ້ໂບນັດພະນັກງານມີລາຍລະອຽດດັ່ງນີ້:

1. ໂບນັດສຳລັບຄະນະອຳນວຍການ: 880,000,000 ກີບ;
   ຜູ້ອຳນວຍການ: 320,000,000 ກີບ;
   ຮອງຜູ້ອຳນວຍການ (2 ທ່ານ) : 280,000,000 ກີບ/ທ່ານ.
2. ໂບນັດສຳລັບພະນັກງານທັງໝົດສ່ວນທີ່ເຫຼືອ 1,000,000,000 ກີບ, ໂດຍຄະນະອຳນວຍການຈະດຳເນີນການຈັດສັນ ໂດຍເບິ່ງຕາມຜົນງານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແລະ ປະລິມານວຽກໂດຍລວມ ຂອງແຕ່ລະບຸກຄົນເປັນຕົວກຳນົດ.

综合考虑全体员工 2018-2024 年度为老-中证券上市体现的自我牺牲和奋斗精神。提请董事会审议参照 2018 年股东会决议，将上述未发放和未申请计提的员工福利金共计 1,880,000,000 基普（约合 63.58 万元）从 2024 年净利润中计提，以现金形式奖励老-中证券全体员工。具体奖励方案如下：

1、管理层奖励 880,000,000 基普（约合 29.76 万元）
   总经理：320,000,000 基普（约合 10.82 万元）
   副总经理（2 名）：280,000,000 基普/人（约合 9.47 万元）
2、剩余全体员工奖励 1,000,000,000 基普（约合 33.82 万元），由管理层根据个人业绩贡献和工作量综合评定后进行合理分配。

ພາຍຫຼັງການຈັດສັນຈ່າຍເງິນປັນຜົນ ຈຳນວນ 5,555,556,000 ກີບ ແລະ ຈ່າຍໂບນັດໃຫ້ພະນັກງານ ເປັນຈຳນວນປະມານ 1,880,000,000 ກີບ, ກຳໄລສະສົມຍອດຄົງເຫຼືອຫຼັງປັນຜົນ ແລະ ຈ່າຍໂບນັດແມ່ນ 715,418,724 ກີບ. ລາຍລະອຽດຄືຕາຕະລາງດັ່ງນີ້:

支付分红 5,555,556,000 基普（约合 187.88 万元）及员工和管理层奖励约共 1,880,000,000 基普（约合 63.58 万元）后，剩余可分配利润 715,418,724 基普（约合 24.19 万元）。具体情况如下表：

ຕາຕະລາງລາຍລະອຽດການແບ່ງປັນຜົນກຳໄລ

ລ/ດ	ລາຍການ	ຈຳນວນ (ກີບ)
1	ກຳໄລສຸດທິ ປີ 2024 (ຖ້າຫັກອາກອນກຳໄລ 20%)	9,056,638,582
2	ຄັງສຳຮອງຕາມລະບຽບການ 10%	905,663,858
3	ສາມາດແບ່ງປັນຜົນໄດ້	8,150,974,724
4	ຈຳນວນເງິນປັນຜົນ	5,555,556,000
5	ຈຳນວນເງິນຫຼັງຈາກຈ່າຍປັນຜົນ	2,595,418,724
6	ໂບນັດພະນັກງານ	1,880,000,000
7	ກຳໄລສະສົມຍອດຄົງເຫຼືອ	715,418,724

利润分配表

序号	项目	金额（基普）	合人民币（元）
1	2024 年净利润（假设扣除 20%所得税）	9,056,638,582	3,062,779
2	计提 10%法定公积金	905,663,858	306,278
3	可分配利润	8,150,974,724	2,756,501
4	分红金额	5,555,556,000	1,878,781
5	分红后金额	2,595,418,724	877,720
6	员工奖励	1,880,000,000	635,780
7	剩余可分配利润	715,418,724	241,940

ດັ່ງນັ້ນ, ຈຶ່ງຂໍຮຽນສະເໜີມາຍັງກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານທີ່ກ່າວມາຂ້າງເທິງ, ພ້ອມທັງມອບສິດໃຫ້ຄະນະອຳນວຍການດຳເນີນການປະຕິບັດຕົວຈິງ ແລະ ລາຍງານສະພາບການປະຕິບັດຕົວຈິງຕໍ່ສະພາບໍລິຫານ.

特提请股东大会审议上述员工奖励方案，授权管理层具体落实并向董事会汇报具体落实情况。

ໝາຍເຫດ: ອັດຕາແລກປ່ຽນອີງຕາມກະດານອັດຕາແລກປ່ຽນເງິນຕາຕ່າງປະເທດຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ເມສາ 2025, 1 ຢວນ = 2,957 ກີບ.

*注：汇率根据老挝外贸银行 2025 年 4 月 30 日外汇牌价 1 元=2,957 基普。

ພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນ ຂອງ ພະນັກງານ ບລຈ

审议老-中证券员工薪酬调整方案

ນັບຕັ້ງແຕ່ສ້າງຕັ້ງ ບລຈ ໃນເດືອນ ມິຖຸນາ 2013 ຫາ ທ້າຍປີ 2019, ອັດຕາແລກປ່ຽນເງິນກີບຕໍ່ໂດລາ ສະຫະລັດ ແລະ ຢວນຍັງຄົງມີຄວາມສະຖຽນລະພາບ, ອັດຕາເງິນເຟີ້ກໍຍັງຄົງຢູ່ໃນຕົວເລກຫຼັກດຽວ. ແຕ່ເລີ່ມປີ 2020, ເງິນກີບໄດ້ອ່ອນຄ່າລົງຢ່າງຮຸນແຮງເມື່ອທຽບກັບໂດລາສະຫະລັດ ແລະ ຢວນ, ໂດຍມີອັດຕາການອ່ອນຄ່າ ສູງເຖິງ 146.08% ແລະ 130.70% ຕາມລໍາດັບ ໃນ 5 ປີ. (ໝາຍເຫດ: ອີງຕາມອັດຕາແລກປ່ຽນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ, ວັນທີ 31 ທັນວາ 2019, 1 ໂດລາສະຫະລັດ = 21,859 ກີບ, 1 ຢວນ = 2,946 ກີບ). ອີງຕາມຂໍ້ມູນຂອງ ທະນາຄານ ແຫ່ງ ສປປ ລາວ ໃນປີ 2022, 2023 ແລະ 2024 ຕາມລໍາດັບ, ອັດຕາເງິນເຟີ້ປະຈໍາປີແມ່ນສູງເຖິງ 22.96%, 31.23% ແລະ 23.13% ຕາມລໍາດັບ. ລາຄາສິນຄ້າແພງສູງຂຶ້ນກໍ ຍ້ອນການອ່ອນຄ່າຂອງເງິນກີບ ແລະ ອັດຕາເງິນເຟີ້ທີ່ສູງຂຶ້ນ ຊຶ່ງໄດ້ສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ລະດັບຊີວິດການ ເປັນຢູ່ຂອງພະນັກງານ ບລຈ. ແຕ່ເພື່ອຮັກສາສິດຜົນປະໂຫຍດຂອງຜູ້ຖືຮຸ້ນ ແລະ ຮັບປະກັນໃຫ້ ບລຈ ບັນລຸເປົ້າ ໝາຍການຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຍົກຕົວຢ່າງ ເງິນເດືອນຂອງພະນັກງານ ບລຈ ຕໍ່ປີມີ 3,897,248,000 ກີບ ທຽບເທົ່າ 481,023 ໂດລາສະຫາລັດ ໃນປີ 2014 ແລະ ພຽງແຕ່ 3,458,005,799 ກີບ ເທົ່າກັບ 158,196 ໂດລາ ໃນປີ 2024. ເງິນເດືອນ ຂອງ ພະນັກງານ ບລຈ ແຕ່ປີສ້າງຕັ້ງ ຄື 2013 ຮອດ 2024 ມີ ລາຍລະອຽດຄືຕາຕະລາງລຸ່ມນີ້:

自老-中证券 2013 年 6 月成立之初至 2019 年底，基普兑美元和人民币汇率基本保持稳定，通胀率也维持在个位数。但 2020 年起，基普兑美元和人民币汇率大幅贬值，5 年贬值幅度分别达 146.08%和 130.70%。（注：根据老挝外贸银行汇率，2019 年 12 月 31 日，1 美元=8,883 基普，1 元=1,277 基普，2024 年 12 月 31 日，1 美元=21,859 基普，1 元=2,946 基普）2022、2023 和 2024 年，根据老挝央行数据，年通胀率分别达 22.96%、31.23%和 23.13%。货币贬值和高通胀下的物价飞涨，给老-中证券员工生活水平带来巨大冲击。但为了维护股东利益，确保公司完成上市目标，4 年来广大员工舍小家为大家，为公司业绩达到上市要求牺牲了很多个人利益。例如，2014 年老-中证券员工薪酬开支 3,897,248,000 基普（约合 131.80 万元），约合 481,023 美元。至 2024 年仅 3,458,005,799 基普（约合 116.94 万元），约合 158,196 美元。老-中证券自 2013 年成立至 2024 年员工薪酬统计入下表：

ຕາຕະລາງສັງລວມເງິນເດືອນພະນັກງານ ບລຈ ແຕ່ປີ 2013-2024

ລ/ດ	ປີ	ຈໍານວນເງິນ (ກີບ)	ອັດຕາແລກປ່ຽນ (ກີບ/ໂດລາ)	ຈໍານວນເງິນ (ໂດລາ)
1	2013	1,629,385,000	8,040	202,660
2	2014	3,897,248,000	8,102	481,023
3	2015	3,689,618,785	8,165	451,882
4	2016	3,546,342,293	8,205	432,217
5	2017	3,305,507,655	8,317	397,440
6	2018	3,500,009,259	8,549	409,406

7	2019	3,666,267,356	8,885	412,636
8	2020	3,937,652,182	9,297	423,540
9	2021	4,016,236,000	11,175	359,395
10	2022	3,865,670,099	17,351	222,792
11	2023	3,526,858,636	20,656	170,743
12	2024	3,458,005,799	21,859	158,196
ສະເລ່ຍ		**3,503,233,422**	**11,550**	**343,494**

2013-2024 年老-中证券员工薪酬统计表

序号	年度	金额（基普）	汇率（基普/美元）	金额（美元）	合人民币（元）
1	2013	1,629,385,000	8,040	202,659.83	551,026.38
2	2014	3,897,248,000	8,102	481,022.96	1,317,973.62
3	2015	3,689,618,785	8,165	451,882.28	1,247,757.45
4	2016	3,546,342,293	8,205	432,217.22	1,199,304.12
5	2017	3,305,507,655	8,317	397,439.90	1,117,858.52
6	2018	3,500,009,259	8,549	409,405.69	1,183,635.19
7	2019	3,666,267,356	8,885	412,635.61	1,239,860.45
8	2020	3,937,652,182	9,297	423,540.09	1,331,637.53
9	2021	4,016,236,000	11,175	359,394.72	1,358,213.05
10	2022	3,865,670,099	17,351	222,792.35	1,307,294.59
11	2023	3,526,858,636	20,656	170,742.58	1,192,715.13
12	2024	3,458,005,799	21,859	158,195.97	1,169,430.44
平均		**3,503,233,422**	**11,550**	**343,494.10**	**1,184,725.54**

ຈາກຕາຕະລາງຂ້າງເທິງ ເຫັນໄດ້ວ່າ ພາຍໃນເວລາ 12 ປີ ນັບຕັ້ງແຕ່ສ້າງຕັ້ງ ບລຈ ແມ່ນບໍ່ໄດ້ມີການປັບປຸງສະຫວັດດີການເງິນເດືອນຂອງພະນັກງານ, ເຊິ່ງມາດຖານເງິນເດືອນທີ່ກຳລັງປະຕິບັດ ແມ່ນໄດ້ເຮັດໃຫ້ ບລຈ ປະສົບກັບຄວາມຫຍຸ້ງຍາກຫຼາຍດ້ານດັ່ງນີ້:

从上表可以看出，老-中证券成立 12 年来，没有调整过员工薪酬待遇，现行的薪酬标准，导致公司面临以下几个方面的困难：

1. ການສູນເສຍພະນັກງານທີ່ມີຄວາມຮູ້ຄວາມສາມາດສູງ ແມ່ນເຮັດໃຫ້ທີມງານບໍ່ໝັ້ນຄົງ

1、 核心人才流失，团队稳定性不足

ການສ້າງຕັ້ງ ບລຈ ໃນໄລຍະທຳອິດ, ບລຈ ມີພະນັກງານທັງໝົດ 34 ທ່ານ, ນັບຕັ້ງແຕ່ການແຜ່ລະບາດຂອງໂຄວິດ-19 ເປັນຕົ້ນມາ, ເພື່ອປະຢັດຄ່າໃຊ້ຈ່າຍ, ນອກຈາກຕຳແໜ່ງວຽກງານວິຊາສະເພາະຕົ້ນຕໍແລ້ວ, ໄດ້ຫຼຸດຈຳນວນພະນັກງານລົງຢ່າງຕໍ່ເນື່ອງ, ຈົນມາຮອດທ້າຍປີ 2024, ບລຈ ມີພະນັກງານພຽງ 19 ທ່ານ, ໃນນັ້ນລວມທັງພະນັກງານທຳຄວາມສະອາດ 1 ທ່ານ. ໃນລະຫວ່າງປີ 2021-2024, ມີພະນັກງານ ບລຈ ຈຳນວນ 9 ທ່ານ ໄດ້ລາອອກຍ້ອນບັນຫາດ້ານສະຫວັດດີການ, ເຊິ່ງກວມເອົາເກືອບ 50% ຂອງຈຳນວນພະນັກງານທັງໝົດ. ໃນນັ້ນ, ປີ

2022 ຊຶ່ງເປັນປີທີ່ຫຍຸ້ງຍາກທີ່ສຸດ ຍ້ອນມີພະນັກງານລາອອກເຖິງ 4 ທ່ານ, ໂດຍທັງໝົດແທ່ນລ້ວນເປັນພະນັກງານຫຼັກທີ່ສຳຄັນຂອງພະແນກກອງທຶນສ່ວນບຸກຄົນ ແລະ ນາຍໜ້າຊື້ ຂາຍຫຼັກຊັບ.

老-中证券成立之初，公司共有 34 名员工，新冠疫情以来，为了节约开支，除核心业务岗位，员工人数不断裁减，截至 2024 年末，老-中证券仅有员工 19 名，其中包含 1 名保洁工作人员。2021-2024 年间，老-中证券共有 9 名员工因待遇问题辞职，占员工总数的近 50%。其中，最艰难的 2022 年，有 4 名员工辞职，全部都是私募基金和经纪业务部门的核心骨干成员。

ເນື່ອງຈາກເງິນກີບມີການອ່ອນຄ່າ, ເມື່ອປຽບທຽບລະຫວ່າງສະຫວັດດີການເງິນເດືອນສະເລ່ຍຂອງ ບລຈ ແລະ ຂອງສະຖາບັນການເງິນທີ່ມາຈາກ ສປ ຈີນ ອື່ນໆຢູ່ ສປປ ລາວ ເຊັ່ນ: ທະນາຄານອຸດສາຫະກຳ ແລະ ການຄ້າ ຈຳກັດ ສາຂານະຄອນຫຼວງວຽງຈັນ (ICBC), ທະນາຄານແຫ່ງປະເທດຈີນ (ຮົ່ງກົ່ງ) ຈາກັດ ສາຂານະຄອນຫຼວງວຽງຈັນ (BOC), ທະນາຄານ ລາວຈີນ ຈຳກັດ (LCNB) ແລະ ອື່ນໆ ແມ່ນບໍ່ຮອດ 1/3 ຂອງລະດັບສະເລ່ຍໃນຂະແໜງການທະນາຄານ; ເມື່ອທຽບກັບບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ແລະ ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ ທີ່ຢູ່ໃນຂະແໜງການດຽວກັນ, ເງິນເດືອນຂອງຄະນະອຳນວຍການແມ່ນບໍ່ຮອດ 1/3 ຂອງຂະແໜງການດຽວກັນ ແລະ ເງິນເດືອນພະນັກງານແມ່ນບໍ່ຮອດ 50% ຂອງຂະແໜງການດຽວກັນ. ຍົກຕົວຢ່າງ, ເງິນເດືອນຜູ້ອຳນວຍການ ທຄຕລ-ກທ ແມ່ນ 6,000 ໂດລາຕໍ່ເດືອນ, ຫຼາຍກວ່າເງິນເດືອນຄະນະອຳນວຍການ 3 ທ່ານ ຂອງ ບລຈ ບວກກັນ. ເງິນເດືອນຕ່ຳສຸດຂອງ ທຄຕລ-ກທ ແມ່ນ 9 ລ້ານກີບ/ເດືອນ, ຫຼາຍກວ່າ 2 ເທົ່າຂອງເງິນເດືອນຂັ້ນຕ່ຳສຸດ ພະນັກງານ ບລຈ.

由于基普贬值，老-中证券的平均薪资待遇和在老挝其它中资金融机构，如：中国工商银行万象分行、中国银行万象分行、老-中银行等相比，不到银行业平均水平的 1/3；和同行业的外贸银行-恭泰证券、老挝开发银行证券相比，管理层薪资大约是同行的不到 1/3，员工大约是同行的不到 50%。例如：外贸银行-恭泰证券总经理的月薪为 6,000 美元，超过老-中证券三名管理层的薪资总和。外贸银行-恭泰证券员工最低薪资为 900 万基普/月（约合 3,044 元），是老-中证券员工最低薪资的 2 倍多。

ໂດຍສະເພາະແມ່ນພະນັກງານທີ່ມີທັກສະດ້ານພາສາຕ່າງປະເທດ ແລະ ເຂົ້າໃຈວຽກງານວິຊາສະເພາະ ແມ່ນສາມາດປ່ຽນໄປເຮັດວຽກກັບບໍລິສັດ ແລະ ສະຖາບັນການເງິນອື່ນໆຂອງ ສປ ຈີນທີ່ຢູ່ ສປປ ລາວ ໄດ້ຢ່າງງ່າຍດາຍ. ປະຈຸບັນ, ຫົວໜ້າພະແນກບັນຊີ-ການເງິນ ແລະ ຫົວໜ້າພະແນກເຕັກນິກຂໍ້ມູນຂ່າວສານທີ່ມີປະສົບການດ້ານບັນຊີ-ການເງິນ ແລະ ມີປະສົບການດ້ານເຕັກໂນໂລຊີມາຫຼາຍປີກໍ່ໄດ້ສະເໜີຂໍລາອອກ ຍ້ອນບັນຫາສະຫວັດດີການເຊັ່ນດຽວກັນ.

特别是有外语优势和熟悉业务的员工，很容易跳槽到其它中资企业和金融机构。目前，有多年财务经验和技术经验的财务部经理、信息技术部经理也因待遇问题拟提出辞职。

2. ການຫາພະນັກງານທີ່ມີຄຸນນະພາບຍາກ ແລະ ຊ່ອງທາງການຮັບສະໝັກພະນັກງານບໍ່ມີປະສິດທິພາບ

2、 高质量人才难以获取，招聘渠道效果不佳

ຫຼັງຈາກພະນັກງານເກົ່າໄດ້ລາອອກ, ເຊິ່ງໃນຕຳແໜ່ງທີ່ປຶກສາດ້ານການເງິນ ແລະ ວຽກງານວິຊາສະເພາະອື່ນໆ, ລະດັບເງິນເດືອນໃນປະຈຸບັນຂອງ ບລຈ ເຮັດໃຫ້ການຮັບພະນັກງານທີ່ມີຄວາມຮູ້ຄວາມສາມາດມານຳໃຊ້ແມ່ນຍາກ

ຫຼາຍ, ມີແຕ່ອາໄສການໂຄສະນາເຜີຍແຜ່ດ້ານອຸດົມການ, ພາລະກິດ, ວິໄສທັດ ແລະ ດ້ານເນື້ອໃນຈິດໃຈອື່ນໆເທົ່ານັ້ນເພື່ອໂອ້ລົມ, ພ້ອມທັງເກ້ຍກ່ອມຊື່ອຄາວຕໍ່ບຸກຄະລາກອນທີ່ມີຄວາມສາມາດແຕ່ມີເງິນເດືອນທີ່ຂ້ອນຂ້າງຕ່ຳໃຫ້ຍັງຄົງເຮັດວຽກຢູ່ ບລຈ ໄປກ່ອນ. ເຖິງແນວໃດກໍ່ຕາມ, ກໍຍັງມີພະນັກງານເຂົ້າໃໝ່ຈຳນວນໜຶ່ງ ມີເງິນເດືອນໃກ້ຄຽງກັບຂອງຫົວໜ້າພະແນກ, ເຊິ່ງສະພາບຄວາມບໍ່ສົມດຸນໃນສະຫວັດດີການຂອງພະນັກງານໃໝ່ແມ່ນສູງກວ່າພະນັກງານເກົ່າ, ສະແດງໃຫ້ເຫັນຄວາມບໍ່ຍຸດຕິທຳຕໍ່ພະນັກງານເກົ່າ.

老员工辞职后，在投行等业务岗位，老-中证券目前的薪资水平很难招到可用的人才，只能通过宣传企业理想、使命、愿景等精神层面的沟通，说服优秀人才暂时以较低的薪酬留在老-中证券。即使这样，还是会出现部分新入职员工薪资接近部门负责人待遇，新员工待遇高于老员工的不平衡情况，对老员工也显失公平。

ຕົວຢ່າງ: ປະຈຸບັນ ບລຈ ຕ້ອງການດ່ວນສຳລັບຮັບສະໝັກພະນັກງານສັນຊາດຈີນທີ່ຈົບການສຶກສາຈາກ ສປປ ລາວ. ໂດຍສະພາບຕະຫຼາດແຮງງານໃນປະຈຸບັນແມ່ນມີເງິນເດືອນຢູ່ທີ່ 1,500 ໂດລາ/ເດືອນ ຫຼັງອາກອນ ພາຍໃຕ້ເງື່ອນໄຂລວມມີອາຫານ ແລະ ທີ່ພັກໃຫ້, ຊຶ່ງໄດ້ສູງລະດັບເງິນເດືອນຂອງຄະນະອຳນວຍການ. ນອກຈາກນີ້, ຍັງຕ້ອງການດ່ວນສຳລັບຮັບສະໝັກຫົວໜ້າພະແນກບັນຊີ-ການເງິນທີ່ມີປະສົບການເຮັດວຽກຢູ່ບໍລິສັດກວດສອບ Big 4 ແລະ ບຸກຄະລາກອນເຕັກນິກ IT ທີ່ມີປະສົບການເຮັດວຽກຫຼາຍກວ່າ 5 ປີ ໃນການເປັນຫົວໜ້າພະແນກເຕັກນິກຂໍ້ມູນຂ່າວສານຂອງສະຖາບັນການເງິນ, ຊຶ່ງລະດັບຂອງເງິນເດືອນກໍຢູ່ທີ່ປະມານ 2,000 ໂດລາ/ເດືອນ.

例如，老-中证券目前迫切需要招聘在老挝留学毕业的中国籍员工。目前的劳动力市场行情是大约包吃住的前提下税后工资 1,500 美元/月，已超过管理层薪资水平。此外，急需招聘的有四大会计师事务所工作经验的财务主管、有 5 年以上金融机构信息技术部门主管工作经验的 IT 技术人才，薪资行情也都在大约 2,000 美元/月的水平。

3. ການພັດທະນາທຸລະກິດຖືກຈຳກັດ ເນື່ອງຈາກຂາດແຄນກຳລັງຄົນ

3、 业务拓展受限，人才支撑能力不足

ເນື່ອງຈາກບຸກຄະລາກອນຂອງວຽກງານວິຊາສະເພາະຫຼັກໄດ້ລາອອກຈາກພະແນກທີ່ປຶກສາດ້ານການເງິນ ແລະ ພະແນກບໍລິຫານກອງທຶນສ່ວນບຸກຄົນ, ສິ່ງຜົນໃຫ້ ບລຈ ບໍ່ສາມາດຮັບເອົາໂຄງການ ແລະ ເຮັດໂຄງການໄດ້ດ້ວຍຕົນເອງ, ຕົວຢ່າງ: ວຽກງານໂຄງການການປະເມີນມູນຄ່າຮຸ້ນຂອງລັດວິສາຫະກິດການບິນລາວ, ເຖິງວ່າຈະເປັນໂຄງການທີ່ ບລຈ ໄດ້ຮັບມາຜ່ານຊ່ອງທາງທີ່ດີຂອງຕົນເອງກໍ່ຕາມ, ແຕ່ຕ້ອງໄດ້ເຊີນເອົາບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ທີ່ມີປະສົບການເຂົ້າມາຮ່ວມຮັບຜິດຊອບເຮັດນຳກັນ, ທັງນີ້ກໍເພື່ອເປັນການຝຶກອົບຮົມບຸກຄະລາກອນ ໃໝ່ ແລະ ຝຶກຝົນທີມງານ.

由于投行和基金业务部门的核心业务人员离职，一度导致公司无法独立承揽和承做业务，例如老挝航空的“股权价值评估业务”，尽管是老-中证券通过好的公关渠道获得的项目，但是不得不邀请有经验的外贸银行-恭泰证券共同承做，以此培养新人、锻炼业务队伍。

ຫຼັງຈາກທີ່ ບລຈ ໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບແລ້ວ, ສະຫວັດດີການເງິນເດືອນຂອງພະນັກງານແມ່ນໄດ້ມາຮອດເວລາສຳຄັນທີ່ສຸດທີ່ຕ້ອງໄດ້ມີການປັບປຸງຕາມກົນໄກຂອງຕະຫຼາດ. ພ້ອມກັນນັ້ນ, ຖານະການເງິນ ແລະ ການພັດທະນາທຸລະກິດຂອງ ບລຈ ໃນປະຈຸບັນແມ່ນມີຄວາມພ້ອມໃນການປັບປຸງເງິນເດືອນ, ທີ່ສຳຄັນແມ່ນສະແດງໃຫ້ເຫັນຈາກການເຕີບໂຕຂອງລາຍໄດ້ ແລະ ກຳໄລ.

老-中证券上市后，员工薪资待遇已经到了需要根据市场规律做出调整的关键时刻。同时，公司目前的财务状况和业务发展情况满足调整薪酬的基本条件，主要体现在收入和利润的增长。

ມາຮອດວັນທີ 30 ເມສາ 2025, ບລຈ ບັນລຸລາຍຮັບທຸລະກິດ 14,848,266,225.93, ເພີ່ມຂຶ້ນ 191.95 % ເມື່ອທຽບກັບໄລຍະດຽວກັນ, ບັນລຸກຳໄລສຸດທິ 10,379,893,571.59 ກີບ, ເພີ່ມຂຶ້ນ 500.43 %, ເມື່ອທຽບກັບໄລຍະດຽວກັນ. ເນື່ອງຈາກ ບລຈ ໄດ້ຮັບການແຕ່ງຕັ້ງເປັນທີ່ປຶກສາດ້ານການເງິນຫຼັກຂອງທຸລະກິດພັນທະບັດລັດຖະບານ, ປີນີ້ກໍຍັງໄດ້ຮັບໂຄງການເພີ່ມໃໝ່ໃນການເປັນທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບສຳລັບ IPO ຂອງ JDB ແລະ BIC, ມີຄວາມຄາດຫວັງຈະໄດ້ໃຫ້ບໍລິການເປັນທີ່ປຶກສາດ້ານການເງິນ ແລະ ຄ້ຳປະກັນການອອກຈຳໜ່າຍຫຼັກຊັບສຳລັບການເພີ່ມທຶນຂະຫຍາຍຮຸ້ນຂອງທະນາຄານການຄ້າຕ່າງປະເທດ ລາວ ມະຫາຊົນ ແລະ ຮ່ວມດຳເນີນທຸລະກິດເປັນທີ່ປຶກສາດ້ານການເງິນສຳລັບການອອກຈຳໜ່າຍຮຸ້ນກູ້ສີຂຽວຂອງ ບໍລິສັດ LOCA ຮ່ວມກັບບໍລິສັດຫຼັກຊັບອີກສອງແຫ່ງ, ເຊິ່ງຄາດວ່າລາຍຮັບທຸລະກິດຂອງທີ່ປຶກສາດ້ານການເງິນໃນປີນີ້ຈະເຕີບໂຕຢ່າງຫຼວງຫຼາຍເມື່ອທຽບກັບປີຜ່ານມາ. ດັ່ງນັ້ນ, ການເຕີບໂຕຂອງທຸລະກິດສາມາດຮອງຮັບ ແລະ ສົມເຫດສົມຜົນໃນການເພີ່ມລະດັບຖານເງິນເດືອນຂອງພະນັກງານ.

截至 2025 年 4 月 30 日，老-中证券实现营业收入 14,848,266,225.93 基普（约合 502.14 万元），同比增长 191.95%，实现净利润：10,379,893,571.59 基普（约合 351.03 万元），同比增长 500.43%。由于老-中证券新担任国债业务的主财务顾问，今年还新增了 JDB、BIC 的 IPO 主财务顾问和承销商，有希望承揽外贸银行增资扩股主财务顾问和承销商业务，和其他两家证券公司联合承做 LOCA 网约车绿色债发行财务顾问业务，今年投行业务收入有望较去年有较大幅度增长。因此，业绩的增长支持老-中证券合理上调员工薪资待遇水平。

ອີງໃສ່ປັດໄຈໂດຍລວມທີ່ກ່າວມາຂ້າງເທິງ, ຈຶ່ງຂໍຮຽນສະເໜີມາຍັງກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງແຜນການປັບປຸງເງິນເດືອນ ພະນັກງານ ບລຈ ຄືດັ່ງນີ້:

1. ເພີ່ມລະດັບເງິນເດືອນພື້ນຖານຂອງພະນັກງານຂຶ້ນ 100%, ໂດຍເລີ່ມຈັດຕັ້ງປະຕິບັດນັບແຕ່ເດືອນມັງກອນ ປີ 2025 ເປັນຕົ້ນໄປ. ຫຼັງຈາກປັບປຸງເງິນເດືອນແລ້ວ, ຄ່າໃຊ້ຈ່າຍເງິນເດືອນພື້ນຖານຈະບໍ່ເກີນ 720 ລ້ານກີບ/ເດືອນ (ໝາຍເຫດ: ປະຈຸບັນປະມານ 360 ລ້ານກີບ/ເດືອນ). ເພື່ອກວມເອົາຄວາມຕ້ອງການຂອງຈຳນວນພະນັກງານທີ່ເພີ່ມຂຶ້ນໃນອະນາຄົດ ແມ່ນໃຫ້ຄະນະອຳນວຍການຄວບຄຸມຄ່າໃຊ້ຈ່າຍລວມຂອງເງິນເດືອນພື້ນຖານບໍ່ເກີນ 800 ລ້ານກີບ/ເດືອນ.
2. 50% ຂອງເງິນເດືອນພື້ນຖານປະຈຸບັນ ຖືເປັນເງິນເດືອນຕາມຜົນງານ, ໂດຍມີແຜນອ້າງອີງດັ່ງນີ້: ມອບສິດໃຫ້ຄະນະອຳນວຍການພາຍຫຼັງຮັບປະກັນການເບີກຈ່າຍເງິນເດືອນຕາມຜົນງານ, ພາຍໃຕ້ເງື່ອນໄຂ ROE ຂອງ ບລຈ ຈະບໍ່ຕ່ຳກວ່າ 9%, ສາມາດອອກໃຫ້ຕາມຫຼັງ ບົດລາຍງານການກວດສອບປະຈຳປີຂອງທຸກໆປີ ໄດ້ຜ່ານການຮັບຮອງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນແລ້ວ. (ໝາຍເຫດ: ອີງໃສ່ປີ 2024, ROE ຂອງ ບລຈ ຢູ່ທີ່ 9.03%)
3. ຖ້າຫາກ ບລຈ ປາກົດມີການຂາດທຶນຢ່າງຕໍ່ເນື່ອງ ຈະຕ້ອງໄດ້ມີການປັບປຸງລະບົບເງິນເດືອນ.
4. ມອບສິດໃຫ້ຄະນະອຳນວຍການດຳເນີນການປະຕິບັດຕົວຈິງ ອີງຕາມມະຕິກອງປະຊຸມຜູ້ຖືຮຸ້ນ.

基于以上综合因素，特提请股东大会审议以下老-中证券员工薪资调整方案：

1、员工固定基础薪资上浮 100%，自 2025 年 1 月开始执行。薪酬调整后，基础薪酬开支不超过 7.2 亿基普/月（约合 24.35 万元/月）。*注：目前约为 3.6 亿基普/月（12.17 万/月）。涵盖未来增加员工人数需求，要求管理层控制基础薪酬开支不高于 8 亿基普/月（约合 27.05 万元/月）。

2、现有薪资 50%部分作为绩效工资，发放方案如下：
授权管理层在确保发放绩效工资后，公司净资产收益率不低于 9%的情况下，可在每年年度审计报告经股东大会审议通过后补发。（*注：参照 2024 年，老-中证券净资产收益率为 9.03%）

3、如老-中证券出现连续亏损，应对薪酬体系做出调整。

4、授权管理层负责按股东大会决议落实。

ໝາຍເຫດ: ອັດຕາແລກປ່ຽນອີງຕາມກະດານອັດຕາແລກປ່ຽນເງິນຕາຕ່າງປະເທດຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ເມສາ 2025, 1 ຢວນ = 2,957 ກີບ.

*注：汇率根据老挝外贸银行 2025 年 4 月 30 日外汇牌价 1 元=2,957 基普。

ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນ ໃຫ້ສະມາຊິກສະພາບໍລິຫານ ບລຈ
审议老-中证券董事会津贴方案

ທ່ານ ຫຼີ ສຽວມິງ (Mr. LI XIAOMING) ຜູ້ຖືຮຸ້ນທຳມະດາ, ເລກບັນຊີຫຼັກຊັບ: 003263, ຖືຮຸ້ນ ບລຈ ຈຳນວນ 38,739,600 ຮຸ້ນ, ເທົ່າກັບ 3.49% ຂອງຮຸ້ນທັງໝົດ ຂອງ ບລຈ. ອີງຕາມ ກົດລະບຽບບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ສະບັບເລກທີ 003/ບລຈ, ລົງວັນທີ 14 ຕຸລາ 2024 ມາດຕາ 20 ການສະເໜີເນື້ອໃນກອງປະຊຸມ ແລະ ການແຈ້ງກອງປະຊຸມຜູ້ຖືຮຸ້ນ ໄດ້ກຳນົດໄວ້ວ່າ: ເມື່ອເປີດກອງປະຊຸມຜູ້ຖືຮຸ້ນ, ສະພາບໍລິຫານ ຜູ້ຖືຮຸ້ນ ຜູ້ດຽວ ຫຼື ຫຼາຍຄົນຮ່ວມກັນຖືຮຸ້ນ 3% ຂຶ້ນໄປ, ມີສິດສະເໜີເນື້ອໃນກອງປະຊຸມ. ຜູ້ຖືຮຸ້ນດັ່ງກ່າວສາມາດຍົກຂໍ້ສະເໜີແກ່ຜູ້ຮຽກປະຊຸມຢ່າງໜ້ອຍ 10 ວັນ ກ່ອນການເປີດກອງປະຊຸມ. ຜູ້ຮຽກປະຊຸມຄວນອອກແຈ້ງການເພີ່ມຕື່ມເພື່ອແຈ້ງເນື້ອໃນກອງປະຊຸມທີ່ສະເໜີໃໝ່ພາຍໃນ 2 ວັນ ຫຼັງຈາກໄດ້ຮັບຂໍ້ສະເໜີ. ເຊິ່ງຜູ້ຖືຮຸ້ນດັ່ງກ່າວໄດ້ສະເໜີວາລະຕໍ່ກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 2 ສິງຫາ ດັ່ງນີ້:

自然人股东李孝明先生，证券账号：003263，持有老-中证券 38,739,600 股，持股比例 3.49%。根据《老-中证券公众公司章程》“第二十条 股东大会的提案与通知”规定“公司召开股东大会，董事会及单独或者合并持有公司 3%以上股份的股东，有权向公司提出提案。单独或者合计持有公司 3%以上股份的股东，可以在股东大会召开 10 日前提出临时提案并书面提交召集人。召集人应当在收到提案后 2 日内发出股东大会补充通知，公告临时提案的内容。”该股东于 8 月 2 日向股东大会提交以下临时议案：

ບລຈ ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຄວນຈັດສັນເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ໂດຍອີງໃສ່ຂະໜາດຂອງບໍລິສັດ, ຜົນການດຳເນີນງານ ແລະ ບົດບາດການມີສ່ວນຮ່ວມຂອງສະມະຊິກສະພາບໍລິຫານ. ເນື່ອງຈາກວ່າ ສະມາຊິກສະພາບໍລິຫານຕ້ອງລົງທຶນໃຊ້ເວລາ ແລະ ສະຕິປັນຍາຫຼາຍໃນການປະຕິບັດໜ້າທີ່ ແລະ ຕ້ອງແບກຮັບຄວາມສ່ຽງທາງດ້ານການຕັດສິນໃຈ. ດັ່ງນັ້ນ ອີງຕາມຫຼັກການສິດ ແລະ ພັນທະເທົ່າທຽມກັນ, ບລຈ ຈຶ່ງຄວນຈັດສັນເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ເພື່ອເປັນການຮັບປະກັນການປະຕິບັດໜ້າທີ່ຕາມປົກກະຕິ. ການຈັດສັນເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ເພື່ອຈູງໃຈໃຫ້ ສະມາຊິກສະພາບໍລິຫານປະຕິບັດໜ້າທີ່ໄດ້ດີຂຶ້ນ ແລະ ມີສ່ວນຮ່ວມໃນການບໍລິຫານ ແລະ ການຕັດສິນໃຈຂອງບໍລິສັດຢ່າງເປັນເຈົ້າການ. ໂດຍການຈັດສັນຄ່າອຸດໜູນ ສາມາດຈູງໃຈໃຫ້ສະມາຊິກສະພາບໍລິຫານ ທຸ່ມເທໃນການພັດທະນາ ບລຈ. ເງິນອຸດໜູນສະມາຊິກສະພາບໍລິຫານ ເປັນສ່ວນສຳຄັນໃນໂຄງສ້າງການບໍລິຫານຂອງ ບລຈ. ມາດຕະຖານ ເງິນອຸດໜູນສະມາຊິກສະພາບໍລິຫານ ທີ່ສົມເຫດສົມຜົນ ຊ່ວຍພັດທະນາປະສິດທິພາບການບໍລິຫານຂອງ ບລຈ ເພື່ອສົ່ງເສີມການເຕີບໂຕຢ່າງຍືນຍົງ.

老-中证券作为上市公司，应根据公司自身规模、业绩和董事贡献等因素为董事安排津贴。由于董事在履行其职责时，需要投入大量的时间和精力，并承担潜在的决策风险。因此，根据权利和义务对等的原则，上市公司应当为董事提供一定的津贴以作为正常履职的保障。设立董事津贴，目的是为了保证董事更好地履行职责，积极参与

公司治理和决策过程。董事会津贴是公司治理结构中的一个重要组成部分。合理的董事会津贴标准有助于提高公司治理效率，从而推动公司的健康发展。

ຮູບແບບການເບີກຈ່າຍເງິນອຸດໜູນໃຫ້ສະມາຊິກສະພາບໍລິຫານ ທີ່ເໝາະສົມສຳລັບ ບລຈ ແມ່ນເບີກຈ່າຍເປັນທຸກໆເຄິ່ງປີ, ໂດຍອີງຕາມສະພາບດຳເນີນທຸລະກິດຂອງ ບລຈ, ເຊິ່ງຈະອີງຕາມມາດຕະຖານການເບີກຈ່າຍດັ່ງນີ້:

1. ປະທານສະພາບໍລິຫານ: 35,000,000 ກີບ;
2. ຮອງປະທານສະພາບໍລິຫານ: 30,000,000 ກີບ;
3. ສະມາຊິກສະພາບໍລິຫານ (6 ທ່ານ): 25,000,000 ກີບ/ທ່ານ.

*ໝາຍເຫດ: 1. ຍ້ອນທ່ານຜູ້ອຳນວຍການ ແລະ ສະມາຊິກສະພາບໍລິຫານທີ່ມີສ່ວນຮ່ວມໃນການບໍລິຫານ ໄດ້ຮັບໂບນັດຂອງຄະນະອຳນວຍການແລ້ວ ແລະ ຈະບໍ່ໄດ້ຮັບເງິນອຸດໜູນຊ້ຳອີກໃນສ່ວນຂອງສະມາຊິກສະພາບໍລິຫານ;

2. ຫຼັງຈາກຮັບປະກັນການເບີກຈ່າຍເງິນອຸດໜູນຂອງສະມາຊິກສະພາບໍລິຫານແລ້ວ, ຈະໃຫ້ການເບີກຈ່າຍພາຍໃຕ້ສະພາບຂອງ ROE ຂອງ ບລຈ ບໍ່ຕ່ຳກວ່າ 9% ຕໍ່ປີ. ກໍລະນີ ROE ປະຈຳປີຈາກຜົນການດຳເນີນງານ ຕ່ຳກວ່າ 9%, ເວລານັ້ນຈະບໍ່ມີການເບີກຈ່າຍເງິນອຸດໜູນໃຫ້ແກ່ສະມາຊິກສະພາບໍລິຫານ;

3. ຂໍແນະນຳຫຼັງຈາກຜ່ານວາລະນີ້ແລ້ວ, ການເບີກຈ່າຍເງິນອຸດໜູນຂອງສະມາຊິກສະພາບໍລິຫານຈະເລີ່ມແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ.

适合老-中证券的董事津贴发放模式为根据公司经营情况每半年发放一次，按如下标准发放：

1、 董事长：35,000,000 基普（约合 1.18 万元）
2、 副董事长：30,000,000 基普（约合 1.01 万元）
3、 董事（6 名）：25,000,000 基普/人（约合 0.85 万元）

*注：1、总经理兼执行董事参与公司管理层激励体系，不参与领取董事津贴；

2、在确保董事津贴发放后，公司净资产收益率不低于 9%的情况下给予发放。经营业绩年化净资产收益率低于 9%的情形，当期不发放董事津贴；

3、建议本议案通过后，董事会津贴发放起始日期为 2025 年 1 月 1 日。

ດັ່ງນັ້ນ, ຈຶ່ງຂໍຮຽນສະເໜີມາຍັງກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ ວາລະທີ່ກ່າວມາຂ້າງເທິງ, ພ້ອມທັງມອບສິດໃຫ້ຄະນະອຳນວຍການດຳເນີນການປະຕິບັດຕົວຈິງ.

特提请股东大会审议上述临时议案，并授权管理层具体落实。

ໝາຍເຫດ: ອັດຕາແລກປ່ຽນອີງຕາມກະດານອັດຕາແລກປ່ຽນເງິນຕາຕ່າງປະເທດຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 30 ເມສາ 2025, 1 ຢວນ = 2,957 ກີບ.

*注：汇率根据老挝外贸银行 2025 年 4 月 30 日外汇牌价 1 元=2,957 基普。

ໃບມອບສິດ

授权委托书

(1) ຂ້າພະເຈົ້າ.....ສັນຊາດ.....

ບັດປະຈຳຕົວເລກທີ.....ຫຼື ໜັງສືຜ່ານແດນເລກທີ.....

ທີ່ຢູ່ປະຈຸບັນເຮືອນເລກທີ.....ບ້ານ.....ເມືອງ.....ແຂວງ.....

ເບີໂທລະສັບ.....ອີເມວ.....

ເປັນຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ)

ມີຮຸ້ນທີ່ຖືຄອງຈຳນວນ.....ຮຸ້ນ ຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ.

本人姓名：_____国籍：_____

身份证号码：_____ 或护照号码：_____

现住址：门牌号_____ ，村_____ ，县_____，省/市_____，

电话号码：_____ 电子邮箱：_____

作为老-中证券公众公司（老-中证券）的股东

持有该公司股份共_____股，享有同等数量的表决权。

(2) ຂໍມອບໝາຍໃຫ້ທ່ານ.....ອາຍຸ.....

ສັນຊາດ.....ບັດປະຈຳຕົວເລກທີ.....

ຫຼື ໜັງສືຜ່ານແດນເລກທີ.....

ທີ່ຢູ່ປະຈຸບັນເຮືອນເລກທີ.....ບ້ານ.....ເມືອງ.....ແຂວງ.....

ເບີໂທລະສັບ.....ອີເມວ.....

兹授权 姓名：_____ 年龄_____

国籍：_____身份证号码：_____

或护照号码：_____

现住址：门牌号_____ ，村_____ ，县_____，省/市_____，

电话号码：_____ 电子邮箱：_____

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024, ທີ່ຈະຈັດຂຶ້ນໃນ ເວລາ 9:00 ໂມງ ຂອງວັນທີ 5 ກັນຍາ 2025.

为本人的代理人，代表本人出席将于 2025 年 9 月 5 日北京时间 10:00 召开的老-中证券 2024 年度股东大会，并代为行使表决权。

(3) ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງຈາກສອງທາງເລືອກລຸ່ມນີ້):
本人授权代理人按下列指示在会上行使表决权（请在以下两项中任选一项）：

3.1 ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື
☐ 授权代理人就所有议案自行酌情审议并表决；或

3.2 ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):
☐ 授权代理人按本人的下列意愿进行表决（如选择此项，请对以下所有议案逐一表明“同意”或“不同意”）：

ວາລະ 01: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ແລະ ແຜນການດຳເນີນງານ ປະຈຳປີ 2025 ຂອງ ບລຈ;

议案 01： 审议老-中证券 2024 年度工作报告暨 2025 年度经营计划；
☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

ວາລະ 02: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ບລຈ;

议案 02： 老-中证券 2024 年度审计报告；
☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

ວາລະ 03: ພິຈາລະນາ ແລະ ຮັບຮອງ ປັບປຸງບາງເນື້ອໃນ ຂອງກົດລະບຽບ ບລຈ;

议案 03： 审议变更老-中证券公司章程部分内容；
☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

ວາລະ 04: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ບລຈ;

议案 04: 审议老-中证券 2024 年度分红方案；
☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

ວາລະ 05: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍໂບນັດໃຫ້ພະນັກງານຂອງ ບລຈ;

议案 05： 审议和批准老-中证券员工奖金方案；
☐ ເຫັນດີ 同意 ☐ ບໍ່ເຫັນດີ 不同意

ວາລະ 06: ພິຈາລະນາ ແລະ ຮັບຮອງ ແຜນການປັບປຸງເງິນເດືອນຂອງພະນັກງານ ບລຈ;

议案 06： 审议老-中证券员工薪酬调整方案；

☐ ເຫັນດີ 同意　　☐ ບໍ່ເຫັນດີ 不同意

ວາລະ 07: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນອຸດໜູນ ໃຫ້ສະມາຊິກສະພາບໍລິຫານ ບລຈ.

议案 07： 审议老-中证券董事会津贴方案。

☐ ເຫັນດີ 同意　　☐ ບໍ່ເຫັນດີ 不同意

(4) ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.

代理人作出的任何与本授权委托书规定相悖的表决，均应被视为无效，且不得视作本人的表决意见。

(5) ໃນກໍລະນີນີ້ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ.

若本人未就任何议案明确注明表决意愿，或表述含糊不清，则视为本人同意该议案。

(6) ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.

代理人在会议中依据本授权委托书所实施的一切行为，均视同本人亲自作出。

ທີ່.....ວັນທີ.....

地点：_____ 日期：_____

ເຊັນຜູ້ຖືຮຸ້ນທີ່ມອບໝາຍ
授权股东（签名）

ເຊັນຜູ້ຕາງໜ້າ
代理人（签名）

ໝາຍເຫດ:

备注：

1) ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ ລວມທັງບໍ່ສາມາດແບ່ງແຍກຈຳນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍທ່ານເພື່ອແຍກການລົງຄະແນນສຽງໄດ້;

股东仅可委托一名代理人出席会议并代为行使表决权，不得将其持有的股份分割授权给多名代理人分别进行表决。

2) ໃບມອບສິດສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ບລຈ ມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ;

本授权委托书需前往您所在地区便于办理的法院登记处进行公证，以确保其具备法律效力。对于任何未经法院公证的授权委托书，老-中证券有权拒绝接受。

3) ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.

代理人需向登记处工作人员出示本人有效身份证件（身份证、户口本，或外国投资者适用的护照），同时提交股东同类证件的复印件、本授权委托书以及会议邀请函

ຄຳແນະນຳກ່ຽວກັບການລົງຄະແນນສຽງ
表决指引

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ, ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບສິດໄດ້ລະບຸຢ່າງຈະແຈ້ງແລ້ວກ່ຽວກັບ ການລົງຄະນແນນໃນແຕ່ລະວາລະ ບລຈ ຈະບັນທຶກການລົງຄະແນນສຽງ ໃນເວລາລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງຄະແນນສຽງອີກ.

   与会者于会议登记时，将领取所有待表决议案的选票。针对代理表决情形，若授权股东已在委托书中清晰表明对各议案的表决意向，老 – 中证券将在登记环节直接记录其表决结果，届时代理人无需重复表决。

2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນຳສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີ ຕໍ່ບັນຫາດັ່ງກ່າວ ກໍບໍ່ຈຳເປັນຕ້ອງລົງຄະແນນສຽງໃດໆ).

   会议仅邀请对所呈报议案持反对意见的股东进行表决（即同意该议案的股东无需进行任何表决动作）。

3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ, ຕ້ອງໄດ້ລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈຳນວນຮຸ້ນ ບລຈ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕິນກາໃສ່ຫ້ອງ ບໍ່ເຫັນດີ.

   表决时，请在发放的选票上填写相关信息，务必清晰注明您的姓名、所持有的老 – 中证券股份数量，并勾选“不同意”栏。

4. ຫຼັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮວບຮວມຄະແນນສຽງ.

   完成表决后，请举起选票，以便工作人员收取并汇总统计。

5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.

   计票结果将于会议现场当场公布，计票遵循一股一票原则。

6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ດັ່ງນີ້:
   - ສຳລັບວາລະ 3 ທີ່ເປັນມະຕິສະເພາະ ຕ້ອງມີຄະແນນສຽງບໍ່ເຫັນດີຫຼາຍກວ່າ 20% ຂອງຈຳນວນຮຸ້ນ ບລຈ ທັງໝົດ;

- ສຳລັບວາລະອື່ນໆ ທີ່ເປັນມະຕິທົ່ວໄປ ຕ້ອງມີຄະແນນສຽງບໍ່ເຫັນດີຫຼາຍກວ່າ 50% ຂອງຈຳນວນຮຸ້ນ ບລຈ ທັງໝົດໃນທີ່ປະຊຸມຜູ້ຖືຮຸ້ນ.

否决生效的情形：

- 议案 3 属特殊决议，需所持表决权占老-中证券全部股份 20%以上（含）表决“不同意”；
- 其余议案为普通决议，需所持表决权占出席老-中证券股东大会总股份的 50%以上（含）表决“不同意”。

ໝາຍເຫດ:

备注：

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ;
   未登记参会的与会者无表决权。
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນສຽງຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
   对于任何议案，在该议案表决结果宣布之后提交的“不同意”选票，均视为无效票。

ຄຳແນະນຳກ່ຽວກັບເອກກະສານ ແລະ ຫຼັກຖານທີ່ຕ້ອງນຳມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
出席会议所需出示文件及证明材料说明

ເພື່ອຄວາມສະດວກໃນການລົງທະບຽນເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ), ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານຳເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິນ (ສຳລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນຳໃຊ້ໃບຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

为便于登记参加老-中证券公众公司（LCS）股东大会，出席会议的股东或代理人请携带会议邀请函、老挝证券交易所出具的参会确认函；若为代理人出席，还需携带授权委托书。同时，请根据以下不同情况，一并出示可用于证明身份的文件：

1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ

ໃຫ້ນຳເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ:

1.1 ບັດປະຈຳຕົວ

1.2 ສຳມະໂນຄົວ

1.3 ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ)

1. 个人与会者

请在登记时出示本人以下任一有效证件原件：

1.1 身份证

1.2 户口本

1.3 护照（适用于外国投资者）

2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ

ໃຫ້ນຳເອົາເອກະສານໃດໜຶ່ງທີ່ກຳນົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ມາສະແດງເວລາລົງທະບຽນ:

2.1 ໃບອະນຸຍາດລົງທຶນ

2.2 ໃບທະບຽນວິສາຫະກິດ

2.3 ໃບທະບຽນອາກອນສະບັບຫຼ້າສຸດ

2. 法人与会者

请在登记时出示上文第 1 条中规定的与会代表个人身份证明文件，并同时出示以下任一文件的原件或加盖公章的复印件：

2.1 投资许可证

2.2 营业执照

2.3 最新版税务登记证

ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອຳນວຍການ ຕ້ອງໄດ້ນຳເອົາໃບມອບສິນຈາກຜູ້ອຳນວຍການທີ່ມີສິດອຳນາດມາພ້ອມຕື່ມອີກ.

若与会者并非该法人的总经理，还需一并出示由总经理签署的授权委托书。

ເອກະສານ ແລະ ຫຼັກຖານທີ່ຕ້ອງນຳສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສຳລັບພາສາຕ່າງປະເທດ ແມ່ນອະນຸຍາດໃຫ້ສຳລັບພາສາອັງກິດເທົ່ານັ້ນ. ບລຈ ມີສິດປະຕິເສດເອກະສານອ້າງອີງໃດໆທີ່ບໍ່ເປັນໄປຕາມການກຳນົດນີ້.

用于出席会议的身份证明及其他证明材料若为外文，须翻译成老挝语，并由具备资质的翻译公司对译文准确性进行签字认证，且外语文件仅限英文。对于任何不符合本规定的文件，老-中证券有权拒绝接受。

ແຜນທີ່ຂອງສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ ບລຈ
老-中证券 2024 年度股东大会会议地点地图

- ກອງປະຊຸມຜູ້ຖືຮຸ້ນ ບລຈ ສະໄໝສາມັນ ປະຈຳປີ 2024 ໃນວັນທີ 17 ກໍລະກົດ 2025 ເວລາ 9:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄາຕະຫຼາດຫຼັກຊັບລາວ.

  老-中证券 2024 年度股东大会

  时间：2025 年 9 月 5 日（星期三）北京时间 10:00

  地点：老挝首都万象市赛色塔县彭覃村老挝证券交易所大楼 8 楼大会议室

